ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ .0..141....ກປ

ນະຄອນຫຼວງວຽງຈັນ, ວັນທີ...18..ພະຈິກ 2010

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການກວດກາ ແລະ ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

- ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 01/ສພຊ, ລົງວັນທີ 15 ພຶດສະພາ 2004;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມການຄົ້ນຄວ້ານຳສະເໜີ ຂອງກົມກວດກາປ່າໄມ້ ສະບັບເລກທີ 0858/ກກ.ປມ, ລົງວັນທີ 01 ພະຈິກ 2010.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຮູບການ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດວຽກງານກວດກາ ແລະ ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອແນໃສ່ຕິດຕາມການເຄື່ອນໄຫວຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ ຂອງບຸກຄົນ, ການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນບັນດາເຜົ່າ, ການດຳເນີນທຸລະກິດກ່ຽວກັບປ່າໄມ້, ສັດນ້ຳ ແລະ ສັດປ່າ ພ້ອມທັງດຳເນີນການສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອນຳ

ເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ບໍ່ປະປ່ອຍໃຫ້ຜູ້ກະທຳຜິດລົບຫຼີກອອກຈາກການລົງໂທດໄປໄດ້ ແລະ ຫຼີກເວັ້ນ ການລົງໂທດຜູ້ບໍ່ໄດ້ກະທຳຜິດ.

ມາດຕາ 2. ການກວດກາ ແລະ ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການຕິດຕາມການເຄື່ອນໄຫວ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ ຂອງບຸກຄົນ, ການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ ບັນດາເຜົ່າ ລວມທັງ ການດຳເນີນທຸລະກິດກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ປ່າໄມ້, ສັງກັດຢູ່ກົມກວດກາປ່າໄມ້ ໃນການດຳເນີນຄະດີຜູ້ທີ່ລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ບັນດານິຕິກຳອື່ນໆກ່ຽວກັບຊັບພະຍາກອນປ່າໄມ້ ແນໃສ່ຮັບປະກັນປົກປ້ອງກົດໝາຍ ແລະ ນິຕິກຳດັ່ງກ່າວໃຫ້ສັກສິດໃນຂອບເຂດທົ່ວປະເທດ ກໍຄືໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ມາດຕາ 3. ອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ປ່າໄມ້ ໝາຍເຖິງຊັບພະຍາກອນທຳມະຊາດອັນລ້ຳຄ່າ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍ: ຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້ ໂດຍມີຕົ້ນໄມ້ນາໆຊະນິດ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
2. ຊັບພະຍາກອນປ່າໄມ້ ໝາຍເຖິງຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍ: ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆທີ່ມີທັງໝົດຢູ່ໃນເຂດທີ່ດິນປ່າໄມ້;
3. ການດຳເນີນຄະດີອາຍາກ່ຽວກັບຊັບພະຍາກອນປ່າໄມ້ ແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີ ເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບດ້ານ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍ ຢ່າງຖືກຕ້ອງ, ຍຸຕິທຳ ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫຼົບຫຼີກອອກຈາກການລົງໂທດໄປໄດ້ ແລະ ຫຼີກເວັ້ນການລົງໂທດຜູ້ບໍ່ໄດ້ກະທຳຜິດ;

4. ການດຳເນີນການສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໝາຍເຖິງການເຄື່ອນໄຫວປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ປ່າໄມ້ ເຊັ່ນ: ການຮັບ ແລະ ບັນທຶກການແຈ້ງຄວາມກ່ຽວກັບການກະທຳຜິດ, ການອອກຄຳສັ່ງເປີດການສືບສວນ - ສອບສວນ, ການດຳເນີນການສືບສວນ - ສອບສວນ ແລະ ນຳໃຊ້ມາດຕະການຕ່າງໆທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
5. ເຈົ້າໜ້າທີ່ປ່າໄມ້ ໝາຍເຖິງພະນັກງານສັງກັດຢູ່ອົງການກວດກາປ່າໄມ້ ແລະ ທີ່ດິນປ່າໄມ້ (ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້) ຊຶ່ງມີໜ້າທີ່ກວດກາ ແລະ ດຳເນີນການສືບສວນ-ສອບສວນຄະດີກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ;
6. ເຈົ້າໜ້າທີ່ສັດນ້ຳ ແລະ ສັດປ່າ ໝາຍເຖິງພະນັກງານທີ່ເຮັດໜ້າທີ່ກວດສັດນ້ຳ ແລະ ສັດປ່າ;
7. ສະໜາມ I ໝາຍເຖິງສະຖານທີ່ທ້ອນໂຮມໄມ້ທ່ອນທີ່ໄດ້ຊັກລາກຈາກບ່ອນຕັດປ່າໃນສະຖານທີ່ຂຸດຄົ້ນໄມ້ ຕາມແຜນການຂຸດຄົ້ນ;
8. ສະໜາມ II ໝາຍເຖິງສະຖານທີ່ທ້ອນໂຮມໄມ້ ທີ່ໄດ້ຂົນສົ່ງມາຈາກສະໜາມ I ຊຶ່ງສາມາດຕອບສະໜອງໃຫ້ແກ່ການຂົນສົ່ງໄປຫາໂຮງງານປຸງແຕ່ງ ໄດ້ຕະຫຼອດປີ ແລະ ມີຄວາມປອດໄພສູງຈາກໄພທຳມະຊາດ ແລະ ອຸປະຕິເຫດອື່ນໆ ພ້ອມທັງເປັນບ່ອນຕີບແຕ່ງ ແລະ ຂຶ້ນບັນຊີຈັດຊັ້ນຄຸນນະພາບໄມ້;
9. ສະໜາມ III ໝາຍເຖິງສະໜາມທ້ອນໂຮມໄມ້ຢູ່ໂຮງງານປຸງແຕ່ງໄມ້ ຫຼື ສາງຂອງໂຮງງານປຸງແຕ່ງໄມ້;
10. ຄ້ອນກາ ປມ ໝາຍເຖິງຄ້ອນກາທີ່ມີລັກສະນະເປັນວົງມົນ, ມີຮູບດາວ ແລະ ຕົວໜັງສື ປມ (ປ່າໄມ້) ຢູ່ເຄິ່ງກາງຂອງຮູບດາວ ແລະ ມີເລກລະຫັດຢູ່ເບື້ອງເທິງຂອງດາວ ຊຶ່ງໃຊ້ຕີກາໄມ້ຢືນຕົ້ນ, ໄມ້ທ່ອນ, ໄມ້ເລື່ອຍ, ຕໍໄມ້ ແລະ ປູດໄມ້ ເພື່ອເຄື່ອນຍ້າຍເຂົ້າບ່ອນດຳເນີນການຜະລິດ ແລະ ເຄື່ອນຍ້າຍໄປແຂວງຕ່າງໆພາຍໃນປະເທດ;
11. ຄ້ອນກາ ປມລ ໝາຍເຖິງຄ້ອນກາທີ່ມີລັກສະນະເປັນວົງມົນ, ມີຕົວໜັງສື ປມລ (ປ່າໄມ້ລາວ) ຢູ່ເຄິ່ງກາງ, ໃຊ້ຕີກາໄມ້ທ່ອນ, ໄມ້ເລື່ອຍ, ປູດໄມ້ ແລະ ຕໍໄມ້ ເພື່ອສົ່ງອອກຕ່າງປະເທດ.

ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ທຸກການຈັດຕັ້ງທີ່ກ່ຽວຂ້ອງກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້, ກວດກາຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ຢູ່ ສປປ ລາວ.

## ໝວດທີ II

## ການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ມາດຕາ 5. ການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະກອບດ້ວຍການກວດກາການສຳຫຼວດກ່ອນການຂຸດຄົ້ນ, ກວດກາໄມ້ສະໜາມ I, ສະໜາມ II ແລະ ສະໜາມ III, ກວດກາໄມ້ເລື່ອຍ, ໄມ້ຕັບຢູ່ຮ້ານຂາຍໄມ້, ກວດກາການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນປ່າໄມ້ພາຍໃນ ແລະ ສົ່ງອອກຕ່າງປະເທດ, ກວດກາຟາມສັດນ້ຳ ແລະ ສັດປ່າ, ກວດກາສັດນ້ຳ ແລະ ສັດປ່າຢູ່ຕະຫຼາດ, ຮ້ານອາຫານ, ຢູ່ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດ ແລະ ສະຖານທີ່ອື່ນໆ, ກວດກາເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນປ່າໄມ້, ນຳໃຊ້ເນື້ອທີ່ດິນປ່າໄມ້ຂອງບຸກຄົນ ຫຼື ຄອບຄົວ ແລະ ການນຳໃຊ້ເນື້ອທີ່ດິນປ່າໄມ້ຢູ່ເຂດກໍ່ສ້າງພື້ນຖານໂຄງລ່າງ.

ມາດຕາ 6. ການກວດກາການສຳຫຼວດກ່ອນການຂຸດຄົ້ນ

ການກວດກາການສຳຫຼວດກ່ອນການຂຸດຄົ້ນ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາຕົວຈິງ.

ການກວດກາການສຳຫຼວດກ່ອນການຂຸດຄົ້ນທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ຄຳສັ່ງ ຫຼື ຂໍ້ຕົກລົງທີ່ອະນຸຍາດໃຫ້ສຳຫຼວດຈາກຂັ້ນເທິງ;
2. ໃບອະນຸຍາດຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
3. ຂໍ້ມູນການສຳຫຼວດໄມ້ ຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ ພ້ອມດ້ວຍແຜນທີ່ຂອບເຂດ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ.

ການລົງກວດກາການສຳຫຼວດກ່ອນການຂຸດຄົ້ນ ໃນພາກຕົວຈິງ ແມ່ນການລົງກວດກາ:

1. ຂອບເຂດເນື້ອທີ່ໆອະນຸຍາດໃຫ້ສຳຫຼວດ ແລະ ຂອບເຂດຂຸດຄົ້ນໄມ້;
2. ວົດຮອບການຕັດຟັນສຳລັບຮູບແບບການຕັດຍອນ;
3. ເບີຕົ້ນທີ່ໝາຍໃຫ້ຕັດຕາມຊະນິດໄມ້, ໜ້າຕ້າງ, ລວງສູງ, ຈຳນວນຕົ້ນ ແລະ ບໍລິມາດລວມ ທຽບໃສ່ບັນຊີໝາຍຕົ້ນໃຫ້ຕັດ;

4. ນິດວິພາກເສດຖະກິດ - ສັງຄົມ.

**ມາດຕາ 7. ການກວດກາໄມ້ສະໜາມ I**

ການກວດກາໄມ້ສະໜາມ I ແມ່ນການກວດກາໄມ້ ທາງດ້ານເອກະສານ ແລະ ການລົງກວດກາໄມ້ໃນພາກຕົວຈິງຢູ່ສະໜາມ I.

ການກວດກາໄມ້ສະໜາມ I ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ແຜນການອະນຸມັດການຂຸດຄົ້ນໄມ້ຈາກລັດຖະບານ;
2. ຂໍ້ມູນການສຳຫຼວດໄມ້ກ່ອນການຂຸດຄົ້ນຂອງຂະແໜງປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ ພ້ອມດ້ວຍແຜນທີ່ຂອບເຂດການຂຸດຄົ້ນ;
3. ໃບອະນຸຍາດຂຸດຄົ້ນໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
4. ສັນຍາການຂຸດຄົ້ນໄມ້ລະຫວ່າງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ ກັບກອງຂຸດຄົ້ນໄມ້;
5. ໃບທະບຽນ ແລະ ໃບອະນຸຍາດນຳໃຊ້ເຄື່ອງຈັກຕັດໄມ້ຈາກຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ;
6. ໃບອະນຸຍາດນຳໃຊ້ພາຫະນະລາກແກ່ ແລະ ຂົນສົ່ງຈາກພະແນກໂຍທາທິການ ແລະ ຂົນສົ່ງປະຈຳແຂວງ ຫຼື ນະຄອນຫຼວງ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ.

ການລົງກວດກາໄມ້ໃນພາກຕົວຈິງຢູ່ສະໜາມ I ແມ່ນການລົງກວດກາ:

1. ຂອບເຂດຂຸດຄົ້ນໄມ້ ແລະ ການຕັດປຳ້ - ບັ່ນທ່ອນ;
2. ເບິ່ງຕົ້ນທີ່ໝາຍໃຫ້ຕັດຕາມຊະນິດໄມ້, ໜ້າຕ້າງ, ລວງສູງ, ຈຳນວນຕົ້ນ, ຕໍ ແລະ ບໍລິມາດລວມທຽບໃສ່ບັນຊີໝາຍຕົ້ນໃຫ້ຕັດຕາມແຜນການຂຸດຄົ້ນ ຖ້າກໍລະນີຈຳເປັນຕ້ອງສົມທຽບຕໍ ແລະ ທ່ອນໃສ່ກັນ;
3. ຕີລາຄາຜົນກະທົບຕໍ່ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ;
4. ຫຼັງການຂຸດຄົ້ນ ເຊັ່ນ: ການອະນາໄມປ່າ ແລະ ການປູກປ່າ.

**ມາດຕາ 8. ການກວດກາໄມ້ຢູ່ສະໜາມ II**

ການກວດກາໄມ້ຢູ່ສະໜາມ II ແມ່ນການກວດກາໄມ້ ທາງດ້ານເອກະສານ ແລະ ການລົງກວດກາໃນພາກຕົວຈິງຢູ່ສະໜາມ II.

ການກວດກາໄມ້ຢູ່ສະໜາມ II ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ບັນຊີໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້;
2. ຂໍ້ມູນການສຳຫຼວດໄມ້ກ່ອນການຂຸດຄົ້ນຈາກຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ

ພ້ອມດ້ວຍແຜນທີ່ຂອບເຂດການຂຸດຄົ້ນ;

3. ໃບອະນຸຍາດຂຸດຄົ້ນຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
4. ສັນຍາການຂຸດຄົ້ນລະຫວ່າງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ ກັບກອງຂຸດຄົ້ນໄມ້ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ.

ການລົງກວດກາໄມ້ໃນພາກຕົວຈິງຢູ່ສະໜາມ II ແມ່ນການລົງກວດກາ:

1. ຊະນິດໄມ້, ການວັດແທກ, ຂຶ້ນບັນຊີ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ ໂດຍສົມທຽບໃສ່ການອະນຸຍາດ;
2. ສົມທຽບບັນຊີໄມ້ຈາກສະໜາມ I ມາເຖິງສະໜາມ II;
3. ກວດກາການກຳນົດວາງໄມ້ສະໜາມ II ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ.

### ມາດຕາ 9. ການກວດກາໄມ້ທ່ອນຢູ່ສະໜາມ III

ການກວດກາໄມ້ທ່ອນຢູ່ສະໜາມ III ແມ່ນການກວດກາໄມ້ທ່ອນຢູ່ສະໜາມໂຮງ ຊຶ່ງປະກອບດ້ວຍການກວດກາທາງດ້ານເອກະສານ ແລະ ການລົງກວດກາໄມ້ໃນພາກຕົວຈິງຢູ່ສະໜາມ III.

ການກວດກາໄມ້ທ່ອນຢູ່ສະໜາມ III ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ບັນຊີການວັດແທກໄມ້ ແລະ ຈັດຊັ້ນຄຸນນະພາບໄມ້, ໃບຕິດຕາມການຕີກາປ່ອຍປມ ຫຼື ປມລ ໄມ້ທ່ອນຂອງຂະແໜງປ່າໄມ້ ແລະ ຂະແໜງການກ່ຽວຂ້ອງຂອງແຂວງ ຫຼື ນະຄອນຫຼວງ;
2. ບົດບັນທຶກມອບ - ຮັບບັນຊີໄມ້ລະຫວ່າງພະແນກກະສິກຳ ແລະ ປ່າໄມ້ກັບພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
3. ສັນຍາຊື້ - ຂາຍໄມ້, ຕໍໄມ້, ປູດໄມ້, ແຫຼ່ງທີ່ມາຂອງໄມ້, ໃບແຈ້ງລາຄາເສຍພັນໄມ້ທ່ອນ ແລະ ໃບອະນຸຍາດເຄື່ອນຍ້າຍສິນຄ້າພາຍໃນຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບຮັບເງິນຄ່າພັນທະໄມ້ທ່ອນ, ອາກອນກຳໄລ ແລະ ອາກອນຕົວເລກທຸລະກິດຂອງພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
5. ໃບຮັບເງິນຄ່າຊັບພະຍາກອນປ່າໄມ້ເພື່ອເຂົ້າກອງທຶນພັດທະນາປ່າໄມ້ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ ແລະ ເອກະສານຕ່າງໆທີ່ມີສ່ວນພົວພັນ.

ການລົງກວດກາໄມ້ໃນພາກຕົວຈິງຢູ່ສະໜາມ III ແມ່ນການລົງກວດກາ:

1. ສະພາບໄມ້ທ່ອນຢູ່ສະໜາມໂຮງງານຕົວຈິງ ເຊັ່ນ: ໄມ້ທ່ອນເກົ່າ ຫຼື ໄມ້ທ່ອນໃໝ່,

ຈຳນວນທ່ອນ, ບໍລິມາດຕົວຈິງ ແລະ ສົມທຽບໃສ່ໃບອະນຸຍາດເຄື່ອນຍ້າຍພາຍໃນຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ ໃຫ້ຊະນິດໄມ້ ແລະ ຈຳນວນກົງກັນ;

2. ກວດກາໄມ້ແຕ່ລະທ່ອນຢູ່ໃນສະໜາມທຽບໃສ່ກັບບັນຊີໄມ້ ເຊັ່ນ: ຊະນິດໄມ້, ໜ້າຕັດ, ລວງຍາວ, ບໍລິມາດ ແລະ ການຈັດຊັ້ນຄຸນນະພາບໄມ້ແຕ່ລະທ່ອນໃຫ້ກົງກັນ ແລະ ກວດກາເບີຄ້ອນກາແຕ່ລະທ່ອນທຽບໃສ່ໃບຕິດຕາມການຕີກາເຄື່ອນຍ້າຍ.

ມາດຕາ 10. ການກວດກາໄມ້ແປຮູບຢູ່ສາງ ແລະ ໂຮງງານ

ການກວດກາໄມ້ແປຮູບຢູ່ສາງ ແລະ ໂຮງງານ ແມ່ນການກວດກາໄມ້ ທາງດ້ານເອກະສານ ແລະ ການລົງກວດກາຕົວຈິງກ່ຽວກັບໄມ້ແປຮູບຢູ່ສາງ ແລະ ໂຮງງານ.

ການກວດກາໄມ້ແປຮູບຢູ່ສາງ ແລະ ໂຮງງານທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ເອກະສານບົດບັນທຶກມອບ - ຮັບບັນຊີໄມ້ທ່ອນລະຫວ່າງພະແນກກະສິກຳ ແລະ ປ່າໄມ້ ກັບພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ ທຽບໃສ່ບັນຊີໄມ້ລະຫວ່າງໄມ້ທ່ອນ ແລະ ໄມ້ແປຮູບ ລວມທັງໄມ້ຄ້າງສາງ ແລະ ສົ່ງອອກ;
2. ສັນຍາຊື້ - ຂາຍໄມ້ທ່ອນ, ຕໍໄມ້, ປູດໄມ້, ໃບແຈ້ງລາຄາເສຍພັນທະໄມ້ທ່ອນ, ໃບອະນຸຍາດເຄື່ອນຍ້າຍສິນຄ້າພາຍໃນຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
3. ແຫຼ່ງທີ່ມາຂອງໄມ້, ໃບຕິດຕາມການຕີກາປ່ອຍ ປມ ຫຼື ປມລ ໄມ້ທ່ອນຂອງຂະແໜງປ່າໄມ້ ແລະ ຂະແໜງການກ່ຽວຂ້ອງຂອງແຂວງ ຫຼື ນະຄອນຫຼວງ;
4. ໃບຮັບເງິນຄ່າຊົບພະຍາກອນປ່າໄມ້ເພື່ອເຂົ້າກອງທຶນພັດທະນາປ່າໄມ້ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
5. ໃບຮັບເງິນຄ່າພັນທະໄມ້ທ່ອນ, ຄ່າອາກອນກຳໄລ ແລະ ອາກອນຕົວເລກທຸລະກິດຂອງພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ ແລະ ເອກະສານຕ່າງໆ ທີ່ເຫັນວ່າມີຄວາມຈຳເປັນ.

ການລົງກວດກາໄມ້ແປຮູບຢູ່ສາງ ແລະ ໂຮງງານໃນພາກຕົວຈິງ ແມ່ນການກວດກາ:

1. ຈຳນວນໄມ້ແປຮູບຕົວຈິງໂດຍທຽບໃສ່ບັນຊີໄມ້ທ່ອນທີ່ນຳເຂົ້າທຳການຜະລິດ ແລະ ສົ່ງອອກ;
2. ຮອຍເລື່ອຍ ເຊັ່ນ: ເລື່ອຍຈາກໂຮງງານ, ເລື່ອຍດ້ວຍເຄື່ອງຈັກຕັດໄມ້ ແລະ ເລື່ອຍມື.

ມາດຕາ 11. ການກວດກາໄມ້ເລື່ອຍ ແລະ ໄມ້ຕັບຢູ່ຮ້ານຂາຍໄມ້

ການກວດກາໄມ້ເລື່ອຍ ແລະ ໄມ້ຕັບຢູ່ຮ້ານຂາຍໄມ້ ແມ່ນການກວດກາໄມ້ທາງດ້ານເອກະສານ ແລະ ການລົງກວດກາໃນພາກຕົວຈິງ.

ການກວດກາໄມ້ເລື່ອຍ ແລະ ໄມ້ຕັບຢູ່ຮ້ານຂາຍໄມ້ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດເຄື່ອນຍ້າຍສິນຄ້າພາຍໃນ ຈາກພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
2. ໃນກໍລະນີເຄື່ອນຍ້າຍໄມ້ມາຈາກຕ່າງແຂວງ ຕ້ອງມີໃບຕິດຕາມການຕີກາປ່ອຍໄມ້ປມ ຈາກຂະແໜງປ່າໄມ້ແຂວງ, ນະຄອນຫຼວງ;
3. ໃບບິນນຳສົ່ງໄມ້ ຈາກໂຮງເລື່ອຍ ແລະ ໂຮງງານປຸງແຕ່ງໄມ້, ໃນກໍລະນີໄມ້ຢຶດຕ້ອງມີໃບສຳລະເງິນຈາກພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ ແລະ ມີໃບອະນຸຍາດເຄື່ອນຍ້າຍໄມ້ຢຶດຂອງກອງກວດກາປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວາ ແລະ ໃນກໍລະນີໄມ້ກົມນ້ອຍ ຫຼື ໄມ້ຄ້ຳແບບ, ໄມ້ປ່ອງຕ້ອງມີໃບອະນຸຍາດຂຸດຄົ້ນຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບເຄື່ອນຍ້າຍໄມ້ຈາກຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ.

ການລົງກວດກາໄມ້ເລື່ອຍ ແລະ ໄມ້ຕັບ ໃນພາກຕົວຈິງຢູ່ຮ້ານຂາຍໄມ້ ແມ່ນການລົງກວດກາ:

1. ຈຳນວນໄມ້ທີ່ມີການສົງໄສເຊັ່ນ: ຊະນິດໄມ້, ຈຳນວນແຜ່ນ ຫຼື ໂຕ ຫຼື ຕັບ ແລະ ບໍລິມາດ, ລົງເລິກກວດກາໄມ້ເລື່ອຍ ເຊັ່ນ: ເລື່ອຍດ້ວຍຈັກຂອງໂຮງເລື່ອຍ, ເລື່ອຍດ້ວຍຈັກຕັດໄມ້, ເລື່ອຍດ້ວຍເລື່ອຍມື, ຖາກດ້ວຍຂວານ ແລະ ດ້ວຍວິທີການອື່ນໆ;
2. ໃນກໍລະນີໄມ້ຢຶດ ຕ້ອງມີຮອຍຄ້ອນກາ ຕີກາປ່ອຍຈາກກອງກວດກາປ່າໄມ້ປະຈຳແຂວງ, ນະຄອນຫຼວງ;
3. ໃນກໍລະນີໄມ້ກົມນ້ອຍ ຫຼື ໄມ້ຄ້ຳແບບ, ໄມ້ປ່ອງ ຕ້ອງກວດກາຈຳນວນໂຕ ຫຼື ລຳໂດຍທຽບໃສ່ເອກະສານ ແລະ ຕ້ອງເຮັດບົດບັນທຶກຜົນການກວດກາເພື່ອເປັນຫຼັກຖານ.

## ໝວດທີ III

## ການກວດກາການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນປ່າໄມ້ພາຍໃນປະເທດ

ມາດຕາ 12. ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ ພາຍໃນປະເທດ

ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ ພາຍໃນປະເທດ ແມ່ນການ

ກວດກາໄມ້ ທາງດ້ານເອກະສານ ແລະ ການລົງກວດກາຕົວຈິງ ທີ່ມີການເຄື່ອນຍ້າຍພາຍໃນ ສປປ ລາວ.

ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ ພາຍໃນປະເທດທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ບັນຊີການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນສະໜາມ II ແລະ ໃບຕິດຕາມການຕີກາປ່ອຍ ປມ ຫຼື ປມລ ໄມ້ທ່ອນຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ;
2. ປຶດບັນທຶກມອບ - ຮັບບັນຊີໄມ້ລະຫວ່າງພະແນກກະສິກຳ ແລະ ປ່າໄມ້ກັບພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
3. ສັນຍາຊື້ - ຂາຍໄມ້ທ່ອນ, ຕໍໄມ້, ປູດໄມ້, ໃບອະນຸຍາດເຄື່ອນຍ້າຍສິນຄ້າພາຍໃນ ແລະ ໃບແຈ້ງລາຄາເສຍພັນທະໄມ້, ຕໍໄມ້, ປູດໄມ້ ຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບຮັບເງິນຄ່າພັນທະໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ໃບຮັບເງິນຄ່າອາກອນກຳໄລ ແລະ ອາກອນຕົວເລກທຸລະກິດ ຂອງພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
5. ໃບຮັບເງິນຄ່າຊັບພະຍາກອນປ່າໄມ້ເພື່ອເຂົ້າກອງທຶນພັດທະນາປ່າໄມ້ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
6. ໃນກໍລະນີໄມ້ຢຶດ ຕ້ອງມີໃບອະນຸຍາດເຄື່ອນຍ້າຍໄມ້ຢຶດທີ່ຕີກາປ່ອຍຈາກກອງກວດກາປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
7. ໃບນຳສົ່ງໄມ້ທ່ອນແຕ່ລະຄັນລົດຈາກສະໜາມ II-III ຫຼື ໂຮງງານປຸງແຕ່ງໄມ້ຂອງຄະນະກຳມະການກວດກາໄມ້ຂົນລົດ ຈາກຂະແໜງອຸດສາຫະກຳ ແລະ ການຄ້າເມືອງ ແລະ ແຂວງ ຫຼື ນະຄອນຫຼວງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ການລົງກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ ພາຍໃນປະເທດ ໃນພາກຕົວຈິງ ແມ່ນການລົງກວດກາ:

1. ສະພາບໄມ້ທ່ອນຕົວຈິງ ເຊັ່ນ: ໄມ້ທ່ອນເກົ່າ ຫຼື ໄມ້ທ່ອນໃໝ່, ໄມ້ແຕ່ລະທ່ອນ ແລະ ແຕ່ລະຖ້ຽວຢູ່ໃນພາຫະນະຂົນສົ່ງທຽບໃສ່ກັບບັນຊີໄມ້ ແລະ ໃບນຳສົ່ງໄມ້, ຊະນິດໄມ້, ເບີທ່ອນ, ໜ້າຕ້າງ, ລວງຍາວ ແລະ ບໍລິມາດ;
2. ຮອຍຄ້ອນກາ ປມ ແຕ່ລະທ່ອນທຽບໃສ່ໃບຕິດຕາມການຕີກາປ່ອຍ ຂອງຂະແໜງການກ່ຽວຂ້ອງ;
3. ເວລາ ແລະ ເສັ້ນທາງການເຄື່ອນຍ້າຍໄມ້ທີ່ໄດ້ກຳນົດໃຫ້ ແລະ ເອກະສານອື່ນໆທີ່ມີ

ສ່ວນພົວພັນ.

ມາດຕາ 13. ການກວດກາການເຄື່ອນຍ້າຍໄມ້ແປຮູບຢູ່ພາຍໃນປະເທດ

ການກວດກາການເຄື່ອນຍ້າຍໄມ້ແປຮູບຢູ່ພາຍໃນປະເທດ ແມ່ນການກວດກາໄມ້ທາງດ້ານເອກະສານ ແລະ ການລົງກວດກາຕົວຈິງທີ່ມີການເຄື່ອນຍ້າຍພາຍໃນ ສປປ ລາວ.

ການກວດກາການເຄື່ອນຍ້າຍໄມ້ແປຮູບພາຍໃນປະເທດທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດເຄື່ອນຍ້າຍສິນຄ້າພາຍໃນ ຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
2. ບັນຊີລວມຂອງໄມ້ແປຮູບ ທີ່ໄດ້ຮັບອະນຸຍາດ ແລະ ບັນຊີໄມ້ແປຮູບ ຂອງພາຫະນະແຕ່ລະຄັນແຕ່ລະຖ້ຽວ ຈາກໂຮງງານປຸງແຕ່ງໄມ້;
3. ໃບຕິດຕາມການຕີກາປ່ອຍໄມ້ ແລະ ເຄື່ອງປ່າຂອງດົງຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ;
4. ໃບປ່ອຍລົດຂອງຂະແໜງຄຸ້ມຄອງການຂົນສົ່ງ, ພະແນກໂຍທາທິການ ແລະ ຂົນສົ່ງ;
5. ບົດບັນທຶກຢັ້ງຢືນການກວດກາສິນຄ້າ, ເຄື່ອນຍ້າຍພາຍໃນປະເທດ ຂອງຂະແໜງສ່ວຍສາອາກອນ, ພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
6. ບົດບັນທຶກການກວດກາ ແລະ ຢັ້ງຢືນຜະລິດຕະພັນຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ບົດບັນທຶກການບັນຈຸຜະລິດຕະພັນໄມ້ ຂອງພາຫະນະແຕ່ລະຄັນໃນແຕ່ລະຖ້ຽວ ຈາກຂະແໜງຄຸ້ມຄອງອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
7. ເອກະສານອື່ນໆທີ່ກ່ຽວຂ້ອງກັບແຫຼ່ງທີ່ມາຂອງໄມ້.

ການລົງກວດກາການເຄື່ອນຍ້າຍໄມ້ແປຮູບຢູ່ພາຍໃນປະເທດໃນພາກຕົວຈິງ ແມ່ນການລົງກວດກາ:

1. ໄມ້ຢູ່ໃນພາຫະນະແຕ່ລະຄັນໃນແຕ່ລະຖ້ຽວ ໂດຍສົມທຽບໃສ່ກັບເອກະສານ ເຊັ່ນ: ຈຳນວນຕັບ ຫຼື ໂຕ ຫຼື ເສັ້ນ ຫຼື ແຜ່ນ, ບໍລິມາດ, ຊະນິດໄມ້, ຄວາມໜາ, ຄວາມກວ້າງ, ລວງຍາວ ແລະ ຮອຍຄ້ອນກາ;
2. ຕິດຕາມການປ່ອຍໄມ້ໃນແຕ່ລະຄັ້ງໂດຍການສັງລວມຂໍ້ມູນໃຫ້ລະອຽດ ເພື່ອສະຫຼຸບສັງລວມ ແລະ ລາຍງານຜົນຂອງການປ່ອຍໄມ້ ໃຫ້ຂັ້ນເທິງຖັດຕົນ.

ມາດຕາ 14. ການກວດກາການເຄື່ອນຍ້າຍຜະລິດຕະພົນປ່າໄມ້ພາຍໃນປະເທດ

ການກວດກາການເຄື່ອນຍ້າຍຜະລິດຕະພົນປ່າໄມ້ພາຍໃນປະເທດ ແມ່ນການກວດກາ

ທາງດ້ານເອກະສານ ແລະ ການກວດກາໃນພາກຕົວຈິງ ທີ່ມີການເຄື່ອນຍ້າຍພາຍໃນ ສປປ ລາວ.

ການກວດກາການເຄື່ອນຍ້າຍຜະລິດຕະພັນປ່າໄມ້ພາຍໃນປະເທດ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດຂຸດຄົ້ນໄມ້ ແລະ ບັນຊີຜະລິດຕະພັນປ່າໄມ້ ຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
2. ໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນປ່າໄມ້ຂອງແຕ່ລະຖ້ຽວ ຈາກພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
3. ໃບເສຍພັນທະຜະລິດຕະພັນປ່າໄມ້;
4. ໃນກໍລະນີຜະລິດຕະພັນປ່າໄມ້ທີ່ຖືກຍຶດ ຕ້ອງມີໃບອະນຸຍາດເຄື່ອນຍ້າຍຈາກກອງກວດກາປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ.

ການກວດກາການເຄື່ອນຍ້າຍຜະລິດຕະພັນປ່າໄມ້ພາຍໃນປະເທດ ໃນພາກຕົວຈິງ ແມ່ນການລົງກວດກາຜະລິດຕະພັນປ່າໄມ້ ເຊັ່ນ: ຊະນິດພັນ ແລະ ຈຳນວນ ໂດຍສົມທຽບໃສ່ບັນຊີຜະລິດຕະພັນປ່າໄມ້, ແຫຼ່ງທີ່ມາຂອງຜະລິດຕະພັນປ່າໄມ້ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 15. ການກວດກາການເຄື່ອນຍ້າຍໄມ້ຟືນ, ໄມ້ຄ້ຳແບບ, ຫຼັກຮົ້ວ ແລະ ຖ່ານ**

ການກວດກາການເຄື່ອນຍ້າຍໄມ້ຟືນ, ໄມ້ຄ້ຳແບບ, ຫຼັກຮົ້ວ ແລະ ຖ່ານ ຢູ່ພາຍໃນປະເທດ ແມ່ນການກວດກາໄມ້ທາງດ້ານເອກະສານ ແລະ ການລົງກວດກາຕົວຈິງທຸກຄັ້ງ ທີ່ມີການເຄື່ອນຍ້າຍພາຍໃນ ສປປ ລາວ.

ການກວດກາການເຄື່ອນຍ້າຍໄມ້ຟືນ, ໄມ້ຄ້ຳແບບ, ຫຼັກຮົ້ວ ແລະ ຖ່ານ ທາງດ້ານເອກະສານຢູ່ພາຍໃນປະເທດ ແມ່ນການກວດກາກ່ຽວກັບ:

1. ໂກຕາໄມ້ ແລະ ແຫຼ່ງທີ່ມາຂອງໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ (ໃນເຂດທີ່ລັດອະນຸຍາດໃຫ້ດຳເນີນການກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດບຸກເບີກເນື້ອທີ່ ເພື່ອທຳການຜະລິດເທົ່ານັ້ນ);
2. ໃບທະບຽນສວນປູກໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ (ຖ້າມີການຕັດ ແລະ ເຄື່ອນຍ້າຍໄມ້ປູກປະເພດຫວງຫ້າມ ແລະ ໄມ້ພິເສດ);
3. ໃບອະນຸຍາດເຄື່ອນຍ້າຍໄມ້ຟືນ ຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ ແລະ ຖ້າແມ່ນຖ່ານ ຕ້ອງມີໃບອະນຸຍາດເຄື່ອນຍ້າຍຈາກພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບອະນຸຍາດນຳໃຊ້ ເຄື່ອງຈັກຕັດໄມ້ ແລະ ໃບຮັບເງິນຄ່າຊົບພະຍາກອນປ່າໄມ້

ເພື່ອເຂົ້າກອງທຶນພັດທະນາປ່າໄມ້ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;

5. ໃບອະນຸຍາດປຸກສ້າງ, ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ.

ການລົງກວດກາການເຄື່ອນຍ້າຍໄມ້ພື້ນ,ໄມ້ຄໍ່າແບບ, ຫຼັກຮົ້ວ ແລະ ຖ່ານ ໃນພາກຕົວຈິງ ແມ່ນການລົງກວດກາຊະນິດຂອງໄມ້, ຂະໜາດຂອງໄມ້ ແລະ ບໍລິມາດຂອງໄມ້ ໂດຍສົມທຽບໃສ່ໄມ້ທີ່ນຳເຂົ້າມາ.

## ໝວດທີ IV

## ການກວດກາການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນປ່າໄມ້ອອກຕ່າງປະເທດ

**ມາດຕາ 16. ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ອອກຕ່າງປະເທດ**

ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ອອກຕ່າງປະເທດ ແມ່ນກ. ກວດກາໄມ້ທາງດ້ານເອກະສານ ແລະ ການລົງກວດກາຕົວຈິງ ທີ່ມີການເຄື່ອນຍ້າຍອອກຕ່າງປະເທດ.

ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ອອກຕ່າງປະເທດ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດນຳສົ່ງໄມ້ ອອກຕ່າງປະເທດ (ຈາກຜູ້ທີ່ຖືກມອບສິດ);
2. ບັນຊີໄມ້, ຕໍໄມ້, ປູດໄມ້, ໃບຮັບເງິນຄ່າພັນທະໄມ້ ແລະ ໃບຮັບເງິນຄ່າຊັບພະຍາກອນປ່າໄມ້ ເພື່ອເຂົ້າກອງທຶນພັດທະນາປ່າໄມ້ ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
3. ບົດບັນທຶກມອບ - ຮັບບັນຊີໄມ້ລະຫວ່າງພະແນກກະສິກຳ ແລະ ປ່າໄມ້ກັບພະແ. ອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບແຈ້ງລາຄາເສຍພັນທະໄມ້, ໃບນຳສົ່ງໄມ້, ຕໍໄມ້ ແລະ ປູດໄມ້ ແຕ່ລະຄັນລົດຈາກຕົ້ນທາງຫາປາຍທາງ ແລະ ໃບຢັ້ງຢືນຜະລິດຕະພັນ ຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
5. ໃບຮັບເງິນຄ່າຊັກພິເສດ (ໃນກໍລະນີໃຫ້ເກັບ) ແລະ ໃບຮັບເງິນຄ່າອາກອນກຳໄລ ແລະ ອາກອນຕົວເລກທຸລະກິດ ຂອງພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
6. ໃບຕິດຕາມການຕີກາ ປມລ ເຄື່ອນຍ້າຍໄມ້ອອກຕ່າງປະເທດ ຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ;

7. ໃບອະນຸຍາດເຄື່ອນຍ້າຍສິນຄ້າອອກຕ່າງປະເທດ ຂອງກະຊວງ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ (ຕາມທີ່ຖືກມອບສິດ);
8. ໃນກໍລະນີຕໍໄມ້ ແລະ ໄມ້ທ່ອນນ້ອຍທີ່ເປັນໄມ້ຄຸ້ມຄອງ 1, 2, 3 ມີໜ້າຕ້າງ 19 ຊມ ລົງມາທີ່ຂຸດຄົ້ນ ອອກຈາກເຂດໂຄງການພັດທະນາພື້ນຖານໂຄງລ່າງຂອງລັດຖະບານ ຫຼື ແຂວງ ຕ້ອງມີຂໍ້ຕົກລົງຂອງເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ຕາມນິຕິກຳທີ່ວາງອອກໃນແຕ່ລະໄລຍະ;
9. ບັນຊີໄມ້ແຕ່ລະສະບັບທີ່ປ່ອຍອອກໃນແຕ່ລະງວດ ໂດຍການສັງລວມຂໍ້ມູນໃຫ້ລະອຽດ ເພື່ອສະຫຼຸບສັງລວມ ແລະ ລາຍງານຜົນຂອງການປ່ອຍໄມ້ ໃຫ້ຂັ້ນເທິງຖັດຕົນ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງ.

ການກວດກາການເຄື່ອນຍ້າຍໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້ອອກຕ່າງປະເທດ ໃນພາກຕົວຈິງ ແມ່ນການລົງກວດກາ:

1. ລົດແຕ່ລະຄັນ ໂດຍສະເພາະສົມທຽບໄມ້ຢູ່ລົດໃສ່ກັບເອກະສານ ເຊັ່ນ: ຈຳນວນທ່ອນ ຫຼື ຕໍ ຫຼື ປູດ, ບໍລິມາດ, ຊະນິດໄມ້, ໜ້າຕ້າງ, ລວງຍາວ, ເບີ ແລະ ຮອຍຄ້ອນກາໃຫ້ກົງກັບເອກະສານທຸກຢ່າງ;
2. ສະພາບໄມ້ ເຊັ່ນ: ໄມ້ເກົ່າ ຫຼື ໄມ້ໃໝ່ ເພື່ອສົມທຽບກັບປີຂອງການຂຸດຄົ້ນ;
3. ຕິດຕາມການປ່ອຍໄມ້ອອກໃນແຕ່ລະງວດ ໂດຍການສັງລວມຂໍ້ມູນໃຫ້ລະອຽດ ເພື່ອສະຫຼຸບສັງລວມ ແລະ ລາຍງານຜົນຂອງການປ່ອຍໄມ້ໃຫ້ຂັ້ນເທິງຖັດຕົນ.

### ມາດຕາ 17. ການກວດກາການເຄື່ອນຍ້າຍໄມ້ແປຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ

ການກວດກາການເຄື່ອນຍ້າຍໄມ້ແປຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ ແມ່ນການກວດກາໄມ້ທາງດ້ານເອກະສານ ແລະ ການກວດກາໃນພາກຕົວຈິງ ທີ່ມີການເຄື່ອນຍ້າຍອອກຕ່າງປະເທດ.

ການກວດກາການເຄື່ອນຍ້າຍໄມ້ແປຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດນຳສົ່ງໄມ້ແປຮູບອອກຕ່າງປະເທດ (ຜູ້ທີ່ຖືກມອບສິດ);
2. ໃບອະນຸຍາດເຄື່ອນຍ້າຍສິນຄ້າອອກຕ່າງປະເທດ ຂອງກະຊວງ ຫຼື ພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
3. ໃບຢັ້ງຢືນຜະລິດຕະພັນ, ໃບແຈ້ງລາຄາພັນທະໄມ້ ແລະ ບົດບັນທຶກຂອງຄະນະກຳມະການກວດກາໄມ້ຂຶ້ນລົດແຕ່ລະຄັນ ພ້ອມດ້ວຍໃບນຳສົ່ງໄມ້ແຕ່ລະຄັນລົດຂອງພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃນກໍລະນີເປັນໄມ້ຄຸ້ມຄອງ 1, 2, 3 ທີ່ຂຸດຄົ້ນອອກຈາກເຂດໂຄງການພັດທະນາ

ພື້ນຖານໂຄງລ່າງຂອງລັດຖະບານ ຫຼື ແຂວງ ຕ້ອງມີຂໍ້ຕົກລົງອະນຸຍາດເຄື່ອນຍ້າຍສິນຄ້າອອກຕ່າງປະເທດ ຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນ;

5. ໃບ Invoice ແລະ Packing List ຂອງເຈົ້າຂອງສິນຄ້າ;
6. ໃບແຈ້ງເສຍຄ່າພັນທະໄມ້, ໃບແຈ້ງເສຍຄ່າຊັກພິເສດ ແລະ ໃບຮັບເງິນຄ່າອາກອນກຳໄລ ແລະ ອາກອນຕົວເລກທຸລະກິດ ຈາກພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
7. ໃບຕິດຕາມການຕົກາ ປມລ ເຄື່ອນຍ້າຍໄມ້ອອກຕ່າງປະເທດ ຂອງຂະແໜງປ່າໄມ້ແຂວງ ຫຼື ນະຄອນຫຼວງ;

ການລົງກວດກາການເຄື່ອນຍ້າຍໄມ້ແປຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ ໃນພາກຕົວຈິງ ແມ່ນການລົງກວດກາ:

1. ໄມ້ຢູ່ໃນລົດແຕ່ລະຄັນ ໂດຍສົມທຽບໃສ່ກັບເອກະສານ ເຊັ່ນ: ຈຳນວນຕັບ ຫຼື ໂຕ ຫຼື ເສັ້ນ ຫຼື ແຜ່ນ, ບໍລິມາດ, ຊະນິດໄມ້, ຄວາມໜາ, ຄວາມກວ້າງ, ລວງຍາວ ແ[illegible] ຮອຍຄ້ອນກາໃຫ້ກົງກັບເອກະສານທຸກຢ່າງ;
2. ສະພາບໄມ້ ເຊັ່ນ: ໄມ້ເກົ່າ ຫຼື ໄມ້ໃໝ່ ເພື່ອສົມທຽບກັບປີຂອງການຂຸດຄົ້ນ;
3. ຕິດຕາມການປ່ອຍໄມ້ອອກໃນແຕ່ລະງວດ ໂດຍການສັງລວມຂໍ້ມູນໃຫ້ລະອຽດ ເພື່ອສະຫຼຸບສັງລວມ ແລະ ລາຍງານຜົນຂອງການປ່ອຍໄມ້ ໃຫ້ຂັ້ນເທິງຖັດຕົນ.

## ໝວດທີ V
## ການກວດກາສັດນ້ຳ ແລະ ສັດປ່າ

### ມາດຕາ 18. ການກວດກາສັດນ້ຳ ແລະ ສັດປ່າ

ການກວດກາສັດນ້ຳ ແລະ ສັດປ່າ ແມ່ນການຕິດຕາມການເຄື່ອນໄຫວຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ ແລະ ສັດປ່າ ເຊັ່ນ: ກວດກາສັດນ້ຳ ແລະ ສັດປ່າຢູ່ຟາມ, ຢູ່ຕະຫຼາດ, ຮ້ານອາຫານ, ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດ ແລະ ສະຖານທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 19. ການກວດກາຟາມສັດນ້ຳ ແລະ ສັດປ່າ

ການກວດກາຟາມສັດນ້ຳ ແລະ ສັດປ່າ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາຟາມຕົວຈິງ.

ການກວດກາຟາມສັດນ້ຳ ແລະ ສັດປ່າ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບທະບຽນວິສາຫະກິດ, ໃບອະນຸຍາດສ້າງຕັ້ງຟາມ ຫຼື ສວນສັດ ແລະ ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ຈາກຂະແໜງການທີ່ກ່ຽວຂ້ອງ;
2. ໃບສົ່ງເສີມການລົງທຶນ ແລະ ໃບອາກອນຂາອອກ - ຂາເຂົ້າ ຈາກຂະແໜງການທີ່ກ່ຽວຂ້ອງ;
3. ບັນຊີສັດທີ່ນຳເຂົ້າມາໃນຟາມ ຫຼື ສວນສັດ;
4. ໃບຢັ້ງຢືນການສັກຢາກັນພະຍາດ ຂອງສັດຕະວະແພດແຂວງ ຫຼື ນະຄອນຫຼວງ, ໃບຢັ້ງຢືນຖິ່ນກຳເນີດຂອງສັດ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ການລົງກວດກາຟາມສັດນ້ຳ ແລະ ສັດປ່າ ໃນພາກຕົວຈິງ ແມ່ນການລົງກວດກາ:

1. ສະຖານທີ່ຕັ້ງຟາມ ຫຼື ສວນສັດວ່າ: ດຳເນີນກິດຈະການຖືກຕາມບົດວິພາກເສດຖະກິດ, ເຕັກນິກການສ້າງຟາມ, ຜົນກະທົບຕໍ່ສິ່ງແວດລ້ອມຫຼືບໍ່;
2. ມາດຕະການຂອງຟາມ, ສວນສັດ ແລະ ໂຮງງານ;
3. ຄວາມອາດສາມາດຂອງການຜະລິດໃນແຕ່ລະປີ ຂອງແຕ່ລະຊະນິດພັນ ພ້ອມທັງແຜນການສົ່ງອອກໃນແຕ່ລະປີ.

**ມາດຕາ 20. ການກວດກາສັດນ້ຳ ແລະ ສັດປ່າຢູ່ຕະຫຼາດ, ຮ້ານອາຫານ ແລະ ສະຖານທີ່ອື່ນໆ**

ການກວດກາສັດນ້ຳ ແລະ ສັດປ່າ ຢູ່ຕະຫຼາດ, ຮ້ານອາຫານ ແລະ ສະຖານທີ່ອື່ນໆ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາຕົວຈິງ.

ການກວດກາສັດນ້ຳ ແລະ ສັດປ່າຢູ່ຕະຫຼາດ, ຮ້ານອາຫານ ແລະ ສະຖານທີ່ອື່ນໆທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດຂອງຂະແໜງປ່າໄມ້ແຂວງ ຫຼືນະຄອນຫຼວງ ແລະ ໃບຢັ້ງຢືນຖິ່ນກຳເນີດ ແລະ ແຫຼ່ງທີ່ມາຂອງສັດ;
2. ໃບຢັ້ງຢືນການສັກຢາກັນພະຍາດຂອງສັດຕະວະແພດແຂວງ ຫຼື ນະຄອນຫຼວງ;
3. ໃບຢັ້ງຢືນການຊື້ - ຂາຍ ຈາກເຈົ້າຂອງຟາມ ຫຼື ເຈົ້າຂອງສວນສັດ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ການລົງກວດກາສັດນ້ຳ ແລະ ສັດປ່າຢູ່ຕະຫຼາດ, ຮ້ານອາຫານ ແລະ ສະຖານທີ່ອື່ນໆ ໃນພາກຕົວຈິງ ແມ່ນການລົງກວດກາປະເພດສັດນ້ຳ ແລະ ສັດປ່າ ທີ່ນຳມາຂາຍທຽບໃສ່ເອກະສານດັ່ງກ່າວໃຫ້ກົງກັນກັບຈຳນວນທີ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 21. ການກວດກາສັດນ້ຳ ແລະ ສັດປ່າ ຢູ່ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດ**

ການກວດກາສັດນ້ຳ ແລະ ສັດປ່າ ຢູ່ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາໃນພາກຕົວຈິງ.

ການກວດກາສັດນ້ຳ ແລະ ສັດປ່າ ຢູ່ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບສະເໜີຂໍນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ນຳຜ່ານສິນຄ້າເຖິງກະຊວງກະສິກຳ ແລະ ປ່າໄມ້ ໂດຍຜ່ານຂະແໜງການທີ່ກ່ຽວຂ້ອງ;
2. ໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ສົ່ງອອກຄືນ CITES ຂອງກົມປ່າໄມ້;
3. ໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ສົ່ງອອກຄືນ ຈາກອົງການທີ່ກ່ຽວຂ້ອງ CITES ຂອງປະເທດປາຍທາງ ຫຼື ຕົ້ນທາງ (ສຳລັບສິນຄ້ານຳຜ່ານ ໃຫ້ກວດກາເບິ່ງໃບອະນຸຍາດ CITES ຂອງປະເທດຕົ້ນທາງ ແລະ ປາຍທາງ);
4. ໃບອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ນຳຜ່ານ ຈາກກົມນຳເຂົ້າ ແລະ ສົ່ງອອກ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
5. ແຈ້ງການຂອງຫ້ອງວ່າການປົກຄອງແຂວງ ຫຼື ນະຄອນຫຼວງ ກ່ຽວກັບການອະນຸຍາດໃຫ້ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ນຳຜ່ານດ່ານທີ່ອະນຸຍາດ;
6. ໃບຢັ້ງຢືນກ່ຽວກັບການຂະຫຍາຍພັນ ແລະ ການລ້ຽງ;
7. ໃບຢັ້ງຢືນຖິ່ນກຳເນີດ ແລະ ໃບຢັ້ງຢືນປອດພະຍາດ ພ້ອມທັງລາຍການບັນຊີ ແລະ ຈຳນວນສັດ;
8. ສັນຍາລະຫວ່າງຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ;
9. ໃບແຈ້ງລາຍການສິນຄ້າ;
10. ໃບ Invoice ແລະ Packing List ຈາກປະເທດຕົ້ນທາງ ແລະ ປາຍທາງ;
11. ໃບແຈ້ງພາສີ (ໃບເສຍພາສີຍ່ອຍ ຫຼື ໃບບໍ 44 ແລະ ໃບເຄື່ອນຍ້າຍສິນຄ້າສົ່ງອອກ ຫຼື ໃບບໍ 81) ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ການລົງກວດກາສັດນ້ຳ ແລະ ສັດປ່າ ຢູ່ດ່ານພາຍໃນ ແລະ ດ່ານຂາອອກຕ່າງປະເທດໃນພາກຈິງ ແມ່ນການລົງກວດກາຈຳນວນສັດ ແລະ ປະເພດສັດໂດຍທຽບໃສ່ກັບເອກະສານໃຫ້ກົງກັນ.

## ໝວດທີ VI
## ການກວດກາທີ່ດິນປ່າໄມ້

**ມາດຕາ 22. ການກວດກາເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນປ່າໄມ້**

ການກວດກາເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນປ່າໄມ້ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາພາກສະໜາມ ຫຼື ການລົງກວດກາຕົວຈິງຢູ່ໃນເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນ.

ການກວດກາເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນປ່າໄມ້ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດລົງທຶນພາຍໃນ ຫຼື ຕ່າງປະເທດ ຂອງກະຊວງແຜນການ ແລະ ການລົງທຶນ ຫຼື ພະແນກແຜນການ ແລະ ການລົງທຶນປະຈຳແຂວງ ຫຼື ນະຄອນຫຼວງ;
2. ໃບອະນຸຍາດດຳເນີນທຸລະກິດດ້ານກະສິກຳ ແລະ ປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼື ນະຄອນຫຼວງ;
3. ໃບທະບຽນອາກອນພາຍໃນ ຂອງກະຊວງການເງິນ ຫຼື ພະແນກການເງິນປະຈຳແຂວງ ຫຼື ນະຄອນຫຼວງ;
4. ໃບທະບຽນວິສາຫະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ພະແນກອຸດສະຫະກຳ ແລະ ການຄ້າປະຈຳແຂວງ ຫຼື ນະຄອນຫຼວງ;
5. ບົດວິພາກເສດຖະກິດເຕັກນິກຂອງຜູ້ປະກອບການ;
6. ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;
7. ໃບອະນຸຍາດນຳໃຊ້ທີ່ດິນປ່າໄມ້ ຫຼື ໃບອະນຸຍາດບຸກເບີກເນື້ອທີ່ດິນ ຈາກກະຊວງກະສິກຳ ແລະ ປ່າໄມ້, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 75 ແລະ 76 ຂອງກົດໝາຍວ່າດ້ວຍປ່າໄມ້;
8. ໃບສັນຍາເຊົ່າ ຫຼື ສຳປະທານ ລະຫວ່າງຜູ້ປະກອບການກັບອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ;
9. ໃບສຳລະຄ່າສຳປະທານທີ່ດິນ ຂອງອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ.

ການລົງກວດກາເຂດເຊົ່າ ຫຼື ສຳປະທານການນຳໃຊ້ທີ່ດິນປ່າໄມ້ ໃນພາກຕົວຈິງຢູ່ສະໜາມ ແມ່ນການກວດກາ:

1. ຂອບເຂດທີ່ອະນຸຍາດໃຫ້ນຳໃຊ້;
2. ສະຖານທີ່ບຸກເບີກ;
3. ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
4. ການນຳໃຊ້ທີ່ດິນຖືກຕ້ອງ ຕາມເປົ້າໝາຍທີ່ອະນຸຍາດຫຼືບໍ່.

### ມາດຕາ 23. ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ຂອງບຸກຄົນ ຫຼື ຄອບຄົວ

ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ຂອງບຸກຄົນ ຫຼື ຄອບຄົວ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາຕົວຈິງຢູ່ພາກສະໜາມ.

ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ຂອງບຸກຄົນ ຫຼື ຄອບຄົວທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດນຳໃຊ້ທີ່ດິນ ຈາກອົງການປົກຄອງເມືອງ;

2. ໃບເສຍພາສີທີ່ດິນ;

3. ໃບອະນຸຍາດບຸກເບີກເນື້ອທີ່ດິນ ຈາກຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ.

ການລົງກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ຂອງບຸກຄົນ ຫຼື ຄອບຄົວ ໃນພາກຕົວຈິງຢູ່ສະໜາມ ແມ່ນການກວດກາ:

1. ຂອບເຂດທີ່ອະນຸຍາດໃຫ້ນຳໃຊ້;

2. ສະຖານທີ່ບຸກເບີກ;

3. ການນຳໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍທີ່ອະນຸຍາດ ຫຼື ບໍ່.

## ມາດຕາ 24. ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ ຢູ່ເຂດກໍ່ສ້າງພື້ນຖານໂຄງລ່າງ

ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ຢູ່ເຂດກໍ່ສ້າງພື້ນຖານໂຄງລ່າງ ແມ່ນການກວດກາທາງດ້ານເອກະສານ ແລະ ການລົງກວດກາຕົວຈິງຢູ່ພາກສະໜາມ.

ການກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ ຢູ່ເຂດກໍ່ສ້າງພື້ນຖານໂຄງລ່າງ ທາງດ້ານເອກະສານ ແມ່ນການກວດກາກ່ຽວກັບ:

1. ໃບອະນຸຍາດ ຫຼື ຂໍ້ຕົກລົງ ຂອງລັດຖະບານ, ກະຊວງກະສິກຳ ແລະ ປ່າໄມ້, ອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະ ອົງການປົກຄອງແຂວງທີ່ກ່ຽວຂ້ອງ;

2. ບົດວິພາກເສດຖະກິດເຕັກນິກ ຂອງຜູ້ປະກອບການ;

3. ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

ການລົງກວດກາການນຳໃຊ້ເນື້ອທີ່ດິນປ່າໄມ້ ເຂດກໍ່ສ້າງພື້ນຖານໂຄງລ່າງ ໃນພາກຕົວຈິງຢູ່ສະໜາມ ແມ່ນການກວດກາ:

1. ຂອບເຂດທີ່ອະນຸຍາດໃຫ້ນຳໃຊ້ທີ່ດິນ;

2. ສະຖານທີ່ບຸກເບີກ;

3. ການນຳໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍທີ່ອະນຸຍາດ ຫຼື ບໍ່.

## ມາດຕາ 25. ການສ້າງບົດບັນທຶກການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການສ້າງບົດບັນທຶກການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການເຮັດບົດບັນທຶກການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອເກັບໄວ້ເປັນຫຼັກຖານ ແລະ ເປັນຂໍ້ມູນໃນການລາຍງານຫາຂັ້ນເທິງຖັດຕົນ.

ເນື້ອໃນຂອງບົດບັນທຶກຕ້ອງລະອຽດ ແລະ ຈະແຈ້ງ ໂດຍສະເພາະສິ່ງທີ່ເປັນປະໂຫຍດຕໍ່ການລາຍງານ ແລະ ມີຄວາມຈຳເປັນທາງດ້ານນິຕິກຳ ພ້ອມທັງໃຫ້ຜູ້ກ່ຽວຂ້ອງເຊັນຮັບຮອງເອົາ

ເນື້ອໃນ ແລະ ເຈົ້າໜ້າທີ່ກວດກາເຊັນເພື່ອເປັນຫຼັກຖານໃນການກວດກາ.

ບົດບັນທຶກການກວດກາ ຕ້ອງເຮັດເປັນສາມສະບັບ ສະບັບຕົ້ນປະກອບໃສ່ສຳນວນຄະດີ, ສະບັບໜຶ່ງໃຫ້ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນເກັບມ້ຽນໄວ້ ແລະ ສະບັບໜຶ່ງມອບໃຫ້ຜູ້ໃຫ້ການ ຫຼື ຜູ້ຖືກກວດກາ.

## ມາດຕາ 26. ຂອງກາງທີ່ພົບເຫັນໃນເວລາກວດກາ

ຂອງກາງທີ່ພົບເຫັນໃນເວລາກວດກາ ແມ່ນວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ເຊັ່ນ: ວັດຖຸສິ່ງຂອງທີ່ຮັບໃຊ້ ຫຼື ຈະຮັບໃຊ້ການກະທຳຜິດທີ່ໄດ້ມາ ຫຼື ຈະໄດ້ມາຈາກການກະທຳຜິດ.

ຂອງກາງທີ່ພົບເຫັນໃນເວລາກວດກາ ຕ້ອງໄດ້ປົກປັກຮັກສາ, ຄຸ້ມຄອງ, ເກັບມ້ຽນໃນສະຖານທີ່ປອດໄພ ແລະ ເໝາະສົມ ພ້ອມທັງຂຶ້ນບັນຊີຢ່າງລະອຽດ ແລະ ປະຕິບັດ ດັ່ງນີ້:

1. ຂອງກາງທີ່ເປັນໄມ້ ຕ້ອງໄດ້ຕີກາອາຍັດ ຫຼື ຢຶດໄວ້;
2. ຂອງກາງທີ່ເປັນວັດຖຸສິ່ງຂອງທີ່ສາມາດຫຸ້ມຫໍ່ໄດ້ ຕ້ອງໄດ້ຫຸ້ມຫໍ່ໃສ່ຖົງ, ອັດຕິດຄັ່ງ, ປະທັບຕາ ແລະ ຮັກສາໄວ້ໃຫ້ດີ;
3. ຂອງກາງທີ່ເປັນເງິນຕາ, ເຊັກ ຫຼື ພັນທະບັດອື່ນໆ, ວັດຖຸທີ່ມີຄ່າ ຕ້ອງເອົາໄປຝາກໄວ້ນຳທະນາຄານຕາມລະບຽບການ;
4. ສຳລັບເງິນທີ່ເປັນຫຼັກຖານໃນການດຳເນີນຄະດີ ຕ້ອງມີການຈົດເລກເງິນແຕ່ລະໃບຢ່າງລະອຽດ;
5. ຂອງກາງທີ່ເປັນສິ່ງບູດເນົ່າ ຫຼື ເສື່ອມຄຸນໄວ ເປັນຕົ້ນແມ່ນໄມ້ເນື້ອອ່ອນ ແລະ ເຄື່ອງປ່າຂອງດົງບາງຊະນິດ ຕ້ອງຂາຍເພື່ອເອົາເງິນມາຮັກສາໄວ້;
6. ຂອງກາງທີ່ເປັນສັດນ້ຳ ແລະ ສັດປ່າ ໂດຍສະເພາະສັດເປັນ ຫຼື ສັດຍັງມີຊີວິດຢູ່ແມ່ນໃຫ້ນຳໄປປ່ອຍເຂົ້າສູ່ປ່າໄມ້ ແລະ ປ່ອຍລົງລຳນ້ຳທຳມະຊາດ ທີ່ເຫັນວ່າມີຄວາມປອດໄພຕໍ່ສັດທີ່ເອົາໄປປ່ອຍ, ສ່ວນສັດທີ່ຕາຍ ຫຼື ສິ້ນສ່ວນທີ່ເປັນຊີ້ນດິບ ແມ່ນໃຫ້ນຳໄປຈູດ ຫຼື ຝັງດິນ ແລະ ສິ້ນສ່ວນທີ່ເປັນຊາກແຫ້ງ ແມ່ນໃຫ້ເກັບຮັກສາໄວ້ ໃນສະຖານທີ່ປອດໄພ ແລະ ເໝາະສົມ.

## ມາດຕາ 27. ຫຼັກຖານທີ່ພົບເຫັນໃນເວລາດຳເນີນການກວດກາ

ຫຼັກຖານທີ່ພົບເຫັນໃນເວລາດຳເນີນການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນຂໍ້ມູນຕົວຈິງທີ່ຊີ້ບອກວ່າມີ ຫຼື ບໍ່ມີພຶດຕິກຳທີ່ເປັນອັນຕະລາຍຕໍ່ສັງຄົມ, ຄວາມຜິດຂອງບຸກຄົນທີ່ໄດ້ສ້າງພຶດຕິກຳນັ້ນ ແລະ ເຫດການອື່ນທີ່ເປັນປະໂຫຍດໃນການພິຈາລະນາຄະດີໃຫ້ຖືກຕ້ອງ ຊຶ່ງຫຼັກຖານໃນຄະດີອາຍາລວມມີ: ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ

ແລະ ຫຼັກຖານທາງດ້ານບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນພາກທີ II ມາດຕາ 19, 20 ແລະ 21 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 28. ການລາຍງານຜົນຂອງການກວດກາ**

ຫຼັງຈາກການກວດກາສຳເລັດ ແລະ ໄດ້ເຮັດບົດບັນທຶກແລ້ວ ໃຫ້ເຮັດບົດລາຍງານຜົນຂອງການກວດກາຫາຂັ້ນເທິງກຸ້ດຕົນ ໂດຍອີງໃສ່ບົດບັນທຶກ, ພ້ອມທັງຄັດຕິດບົດບັນທຶກດັ່ງກ່າວມາພ້ອມ.

ການເຮັດບົດລາຍງານຕ້ອງມີບ່ອນອີງ, ມີຫຼັກຖານຈະແຈ້ງ ແລະ ເຊັນຢັ້ງຢືນຜ່ານອົງການຈັດຕັ້ງທີ່ກ່ຽວຂ້ອງ (ຖ້າມີ). ກໍລະນີການກວດກາຫາກພົບບັນຫາຫຍຸ້ງຍາກ ໃຫ້ລາຍງານຫາຂັ້ນເທິງດ່ວນ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ.

## ໝວດທີ VII

## ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

**ມາດຕາ 29. ການເປີດການສືບສວນ - ສອບສວນຄະດີ ກ່ຽວກັບປ່າໄມ້ ແລະ ຊັບພະຍາ ກອນປ່າໄມ້**

ສາເຫດຂອງການເປີດການສືບສວນ - ສອບສວນກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ອີງໃສ່ມາດຕາ 36 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດັ່ງນີ້:

1. ມີຄຳຮ້ອງຟ້ອງ ຫຼືການແຈ້ງຄວາມຂອງບຸກຄົນ ຫຼືການຈັດຕັ້ງກ່ຽວກັບການກະທຳຜິດຕໍ່ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ;
2. ມີການເຂົ້າມອບຕົວຂອງຜູ້ກະທຳຜິດ;
3. ພົບເຫັນຮ່ອງຮອຍຂອງການກະທຳຜິດ ໂດຍອົງການສືບສວນ - ສອບສວນ ຫຼື ໄອ ຍະ ການປະຊາຊົນ. ໃນເວ ລາຄົ້ນຄວ້າ, ພິຈາລະນາຄະດີ ຖ້າຫາກສານປະຊາຊົນ ພົບເຫັນຫຼັກຖານໃນການກະ ທຳຜິດອັນໃໝ່ ກໍມີສິດສະເໜີໃຫ້ເປີດການສືບສວນ - ສອບສວນຄະດີດັ່ງກ່າວ;

ການສືບສວນ - ສອບສວນຄະດີອາຍາຈະເປີດໄດ້ ກໍຕໍ່ເມື່ອຫາກມີຂໍ້ມູນທີ່ໜັກແໜ້ນຊຶ່ງຊີ້ໃຫ້ເຫັນອົງປະກອບຂອງການກະທຳຜິດເທົ່ານັ້ນ.

**ມາດຕາ 30. ຄຳສັ່ງເປີດການສືບສວນ - ສອບສວນຄະດີ ກ່ຽວກັບປ່າໄມ້ ແລະ ຊັບພະຍາ ກອນປ່າໄມ້**

ຄຳສັ່ງເປີດການສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ອີງໃສ່ມາດຕາ 37 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດັ່ງນີ້:

1. ໃນກໍລະນີທີ່ມີຂໍ້ມູນໜັກແໜ້ນ ກ່ຽວກັບການກະທຳຜິດຫົວໜ້າອົງການສືບສວນ - ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ - ສອບສວນໃນຂອບເຂດສິດອຳ

ນາດຂອງຕົນ. ເນື້ອໃນຂອງຄຳສັ່ງນັ້ນຕ້ອງບອກວັນ, ເວລາ ແລະ ສະຖານທີ່ອອກຄຳສັ່ງ, ຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງຂອງຜູ້ອອກຄຳສັ່ງ ແລະ ພະນັກງານສືບສວນ - ສອບສວນ, ຂໍ້ມູນໃນການເປີດການສືບສວນ - ສອບສວນ, ສະຖານການກະທຳຜິດ ແລະ ມາດຕາທີ່ກ່ຽວຂ້ອງຂອງກົດໝາຍອາຍາ;

2. ໃນກໍລະນີທີ່ຫົວໜ້າອົງການສືບສວນ - ສອບສວນ ເປັນຜູ້ອອກຄຳສັ່ງເປີດການສືບສວນ - ສອບສວນ ຕ້ອງລາຍງານ ໃຫ້ໄອຍະການປະຊາຊົນຊາບໃນທັນໃດ;
3. ໃນກໍລະນີທີ່ບໍ່ມີຂໍ້ມູນໜັກແໜ້ນໃຫ້ແກ່ການເປີດການສືບສວນ - ສອບສວນ ຫຼື ມີສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປນັ້ນ ຫົວໜ້າອົງການສືບສວນ - ສອບສວນ ຕ້ອງອອກຄຳສັ່ງບໍ່ເປີດການສືບສວນ - ສອບສວນ ພ້ອມທັງແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ.
4. ຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຄູ່ຄວາມຝ່າຍໂຈດ ແລະ ຈຳເລີຍ ສາມາດຂໍອຸທອນຕໍ່ໄອຍະການປະຊາຊົນຂັ້ນເທິງທັດນັ້ນ ໄດ້ພາຍໃນກຳນົດເຈັດວັນ ນັບແຕ່ມື້ຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

## ໝວດທີ VIII
## ການສືບສວນ - ສອບສວນ
## ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

### ມາດຕາ 31. ການດຳເນີນການສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການດຳເນີນການສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນຂະບວນການເຄື່ອນໄຫວຂອງອົງການສືບສວນ - ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ກ່ຽວກັບການກວດກາ ແລະ ສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້, ທີ່ດິນປ່າໄມ້ ແລະ ສັດນ້ຳ - ສັດປ່າ ຕາມລະບຽບກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍການດຳເນີຄະດີອາຍາ.

### ມາດຕາ 32. ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ປ່າໄມ້ ຊຶ່ງສັງກັດຢູ່ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້ໂດຍອີງໃສ່ມາດຕາ 39 ຂອງກົດໝາຍ ວ່າດ້ວຍການ ດຳເນີນ ຄະດີອາຍາ ດັ່ງນີ້:

1. ເມື່ອໄດ້ຮັບແຈ້ງຄວາມຢ່າງໜັກແໜ້ນກ່ຽວກັບການກະທຳຜິດ ຫຼື ພົບເຫັນຮ່ອງຮອຍຂອງການກະທຳຜິດແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບພາຍໃນກຳນົດຊາວສີ່ຊົ່ວໂມງ;
2. ຖ້າຫາກເຫັນວ່າເປັນຄະດີສຳຄັນ ຕ້ອງລາຍງານໃນທັນໃດ;
3. ໃນກໍລະນີທີ່ມີຄວາມຈຳເປັນຮີບດ່ວນ ຕ້ອງໄດ້ດຳເນີນການສືບສວນ - ສອບສວນນັ້ນ ຫົວໜ້າອົງການສືບສວນ - ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ - ສອບສວນຕາມມາດຕາ 37 ຂອງກົດໝາຍສະບັບນີ້. ພ້ອມດຽວກັນນັ້ນ, ເຈົ້າໜ້າທີ່ສືບສວນ - ສອບສວນ ຕ້ອງນຳໃຊ້ມາດຕະການສືບສວນ - ສອບສວນ ແລະ ມາດຕະການສະກັດກັ້ນທີ່ໄດ້ກຳນົດໄວ້ໃນກົດໝາຍ;
4. ເມື່ອການສືບສວນ - ສອບສວນໄດ້ສິ້ນສຸດແລ້ວ ຖ້າຫາກເຫັນວ່າບໍ່ມີຫຼັກຖານໜັກແໜ້ນ ຫຼື ມີສາເຫດອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ຊຶ່ງພາໃຫ້ມີການຊັດມ້ຽນ ຫຼື ໂຈະການດຳເນີນຄະດີນັ້ນ ຫົວໜ້າອົງການສືບສວນ - ສອບສວນ ຕ້ອງອອກຄຳສັ່ງຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ ແລ້ວ ລາຍງານໃຫ້ໄອຍະການປະຊາຊົນຊາບ;
5. ຖ້າຫາກເຫັນວ່າ ມີຫຼັກຖານໜັກແໜ້ນວ່າຜູ້ຖືກຫາໄດ້ກະທຳຜິດແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນ ຕ້ອງສົ່ງບົດສະຫຼຸບການສືບສວນ - ສອບສວນ ພ້ອມດ້ວຍສຳນວນຄະດີ ແລະ ຂອງກາງໃຫ້ໄອຍະການປະຊາຊົນ.

### ມາດຕາ 33. ການສັ່ງຟ້ອງ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂຶ້ນສານໂດຍກົງ

ການສັ່ງຟ້ອງຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂຶ້ນສານໂດຍກົງ ແມ່ນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ປ່າໄມ້ ຊຶ່ງສັງກັດຢູ່ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້ ໂດຍອີງໃສ່ມາດຕາ 40 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດວ່າ "ໃນການກະທຳຜິດສະຖານລະຫຸໂທດ ຫຼື ໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີນັ້ນ ຖ້າຫາກມີຫຼັກຖານຄົບຖ້ວນແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຈະສົ່ງສຳນວນຄະດີພ້ອມດ້ວຍຂອງກາງ ແລະ ຜູ້ຕ້ອງຫາໃຫ້ໄອຍະການປະຊາຊົນ ເພື່ອທຳການສັ່ງຟ້ອງຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ - ສອບສວນກໍໄດ້".

### ມາດຕາ 34. ກຳນົດເວລາດຳເນີນການສືບສວນ-ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ກຳນົດເວລາດຳເນີນການສືບສວນ-ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນ

ປ່າໄມ້ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຢ່າງເຄັ່ງຄັດ ດັ່ງນີ້:

1. ເຈົ້າໜ້າທີ່ສືບສວນ - ສອບສວນ ຕ້ອງດຳເນີນການສືບສວນ - ສອບສວນ, ສະຫຼຸບການສືບສວນ - ສອບສວນ ແລະ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງ ສົ່ງໃຫ້ໄອຍະການປະຊາຊົນພາຍໃນກຳນົດທີ່ກສິບວັນຢ່າງຊ້າ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ - ສອບສວນເປັນຕົ້ນໄປ;
2. ຖ້າວ່າມີຂໍ້ມູນ, ຮ່ອງຮອຍໜັກແໜ້ນ ແຕ່ການສືບສວນ - ສອບສວນບໍ່ທັນສິ້ນສຸດ ແລະ ມີຄວາມຈຳເປັນຕ້ອງໄດ້ສືບຕໍ່ນັ້ນ ໄອຍະການປະຊາຊົນ ອາດຈະຕໍ່ກຳນົດເວລາການສືບສວນ - ສອບສວນໃຫ້ຕື່ມອີກເທື່ອລະສອງເດືອນກໍໄດ້ ຕາມການຮ້ອງຂໍຂອງອົງການສືບສວນ - ສອບສວນ;
3. ໃນກໍລະນີທີ່ມີການສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ - ສອບສວນດຳເນີນການສືບສວນ - ສອບສວນເພີ່ມເຕີມນັ້ນ ກຳນົດເວລາການສືບສວນ - ສອບສວນເພີ່ມເຕີມ ແມ່ນບໍ່ໃຫ້ເກີນທີ່ກສິບວັນ ນັບແຕ່ວັນອົງການສືບສວນ - ສອບສວນໄດ້ຮັບສຳນວນຄະດີເປັນຕົ້ນໄປ;
4. ໃນກໍລະນີທີ່ມີການສືບສວນ - ສອບສວນຄືນ ຄະດີທີ່ຖືກໂຈະ ຫຼື ຊັດມ້ຽນໄວ້ນັ້ນ ການສືບສວນ - ສອບສວນ ໃຫ້ປະຕິບັດຕາມກຳນົດເວລາທີ່ໄດ້ກ່າວໄວ້ໃນວັກ 1 ແລະ ວັກ 2 ຂອງມາດຕາ 41 ນັບແຕ່ວັນອອກຄຳສັ່ງໃຫ້ສືບສວນ - ສອບສວນຄະດີຄືນເປັນຕົ້ນໄປ;
5. ໃນການອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ຕໍ່ກຳນົດເວລາການສືບສວນ - ສອບສວນນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນພາຍໃນສີ່ສິບແປດຊົ່ວໂມງ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

## ໝວດທີ IX
## ມາດຕະການສືບສວນ - ສອບສວນ
## ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

### ມາດຕາ 35. ປະເພດມາດຕະການສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ປະເພດມາດຕະການສືບສວນ - ສອບສວນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະກອບດ້ວຍ 8 ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດັ່ງນີ້:

1. ການເອົາຄຳໃຫ້ການ;
2. ການສອບຖາມຊ້ອງໜ້າ;
3. ການຊັນນະສູດສະຖານທີ່ເກີດເຫດ;
4. ການຊັນນະສູດຊາກສົບ;
5. ການກວດຄົ້ນເຄຫະສະຖານ, ຍານພາຫະນະ ຫຼື ຕົວບຸກຄົນ;
6. ການຍຶດ ແລະ ການອາຍັດຊັບ;
7. ການທົດສອບຂໍ້ມູນຄືນໃໝ່;
8. ການຊີ້ຕົວ ແລະການຢັ້ງຢືນ.

**ມາດຕາ 36. ການເອົາຄຳໃຫ້ການ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການເອົາຄຳໃຫ້ການ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 41 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

**ການເອົາຄຳໃຫ້ການຂອງຜູ້ຖືກຫາ:**

1. ເຈົ້າໜ້າທີ່ສືບສວນ - ສອບສວນ, ພະນັກງານສອບສວນ ຕ້ອງເອົາຄຳໃຫ້ການຂອງຜູ້ຖືກຫາໃນທັນໃດ ພາຍຫຼັງທີ່ໄດ້ເປີດການສືບສວນ - ສອບສວນແລ້ວ, ຖ້າວ່າການເອົາຄຳໃຫ້ການຫາກບໍ່ສາມາດຈະດຳເນີນໄດ້ໃນທັນໃດ ກໍຕ້ອງເຮັດບົດບັນທຶກພ້ອມດ້ວຍເຫດຜົນ;
2. ໃນເບື້ອງຕົ້ນຂອງການເອົາຄຳໃຫ້ການນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນຕ້ອງແຈ້ງຂໍ້ກ່າວຫາ ພ້ອມທັງອະທິບາຍສິດ ແລະ ພັນທະຂອງຜູ້ຖືກຫາ.

**ການເອົາຄຳໃຫ້ການຂອງພະຍານ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບ ຜິດຊອບທາງແພ່ງ:**

1. ເຈົ້າໜ້າທີ່ສືບສວນ - ສອບສວນ, ພະນັກງານສອບສວນ ຕ້ອງແຈ້ງສິດ ແລະ ພັນທະຂອງພວກກ່ຽວ, ເຕືອນໃຫ້ຮູ້ຄວາມຮັບຜິດຊອບຕໍ່ຄຳໃຫ້ການຂອງຕົນ ຫຼື ຕໍ່ການປະຕິເສດບໍ່ຍອມໃຫ້ການ;
2. ການເອົາຄຳໃຫ້ການນັ້ນ ຕ້ອງດຳເນີນຢູ່ຫ້ອງການຂອງເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ແຕ່ຖ້າຫາກມີຄວາມຈຳເປັນກໍອາດຈະດຳເນີນຢູ່ບ່ອນອື່ນກໍໄດ້;
3. ໃນການເອົາຄຳໃຫ້ການນັ້ນ ນອກຈາກເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນແລ້ວ ຕ້ອງມີຜູ້ບັນທຶກເຂົ້າຮ່ວມນຳອີກ.

ມາດຕາ 37. ການເອົາຄໍາໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ ປາກກືກ ແລະ ຄົນປັນຍາອ່ອນ ເສັຍຈິດ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການເອົາຄໍາໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ ປາກກືກ ແລະ ຄົນປັນຍາອ່ອນ ເສັຍຈິດ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 44 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາທີ່ກໍານົດວ່າ: "ໃນການເອົາຄໍາໃຫ້ການຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ ປາກກືກ, ຄົນປັນຍາອ່ອນ ເສັຍຈິດ ຊຶ່ງບໍ່ສາມາດປະຕິບັດສິດຂອງຕົນໄດ້ນັ້ນ ຕ້ອງມີການເຂົ້າຮ່ວມຂອງຜູ້ປົກປ້ອງ, ຄູ, ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຕາງໜ້າອື່ນໆ".

ມາດຕາ 38. ບົດບັນທຶກຄໍາໃຫ້ການ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ບົດບັນທຶກຄໍາໃຫ້ການ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 45 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ໃນການເອົາຄໍາໃຫ້ການແຕ່ລະເທື່ອນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງເຮັດບົດບັນທຶກ;
2. ໃນບົດບັນທຶກຄໍາໃຫ້ການນັ້ນຕ້ອງບົ່ງບອກ: ສະຖານທີ່, ວັນ, ເວລາ, ຊື່ ແລະ ນາມສະກຸນ, ຊັ້ນຕໍາແໜ່ງຂອງເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ, ຊື່ ແລະ ນາມສະກຸນ, ຊີວະປະຫວັດຫຍໍ້ຂອງຜູ້ໃຫ້ການ ແລະ ອື່ນໆ ຊຶ່ງໄດ້ກໍານົດໄວ້ໃນແບບພິມ;
3. ເມື່ອໄດ້ເອົາຄໍາໃຫ້ການສິ້ນສຸດແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງອ່ານເນື້ອໃນຂອງບົດບັນທຶກໃຫ້ຜູ້ໃຫ້ການຟັງ ຫຼື ໃຫ້ຜູ້ກ່ຽວອ່ານເອົາເອງກໍໄດ້. ຫຼັງຈາກນັ້ນ ບັນດາຜູ້ເຂົ້າຮ່ວມໃນການເອົາຄໍາໃຫ້ການຕ້ອງພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໃສ່ແຕ່ລະໜ້າ. ໃນກໍລະນີທີ່ເອົາຄໍາໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ປາກກືກ ແລະ ຄົນປັນຍາອ່ອນ ເສັຍຈິດ ຕ້ອງໃຫ້ຜູ້ປົກປ້ອງລົງລາຍເຊັນ ແລະ ແປະໂປ້ມືໃສ່ເພື່ອຢັ້ງຢືນຄໍາໃຫ້ການດັ່ງກ່າວ;
4. ຖ້າຫາກມີການຂີດຂ້າ ຫຼື ເພີ່ມເຕີມຂໍ້ຄວາມໃນບົດບັນທຶກແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ, ຜູ້ບັນທຶກ ແລະ ຜູ້ໃຫ້ການຕ້ອງລົງລາຍເຊັນ ແລະ ແປະໂປ້ມື ຢັ້ງຢືນໄວ້ຕໍ່ໜ້າແຖວບ່ອນຂີດຂ້າ ຫຼື ເພີ່ມເຕີມນັ້ນ;
5. ໃນກໍລະນີທີ່ຜູ້ໃຫ້ການຫາກບໍ່ຍອມລົງລາຍເຊັນ ຫຼື ບໍ່ຍອມແປະໂປ້ມືນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ;

6. ບົດບັນທຶກຄຳໃຫ້ການນັ້ນ ໃຫ້ເຮັດເປັນສາມສະບັບ, ສະບັບຕົ້ນປະກອບໃສ່ສຳນວນຄະດີ, ສະບັບໜຶ່ງໃຫ້ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນເກັບມ້ຽນໄວ້ ແລະ ອີກສະບັບໜຶ່ງມອບໃຫ້ຜູ້ໃຫ້ການ.

**ມາດຕາ 39. ການສອບຖາມຊ້ອງໜ້າ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການສອບຖາມຊ້ອງໜ້າ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 46 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດວ່າ: "ເມື່ອຄຳໃຫ້ການຫາກບໍ່ກົງກັນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນມີສິດທຳການສອບຖາມຊ້ອງໜ້າລະຫວ່າງຜູ້ໃຫ້ການດ້ວຍກັນ ແຕ່ການສອບຖາມຊ້ອງໜ້າແຕ່ລະເທື່ອນັ້ນບໍ່ໃຫ້ເກີນສອງຄົນ. ສຳລັບບົດບັນທຶກການສອບຖາມຊ້ອງໜ້ານັ້ນ ໃຫ້ປະຕິບັດຕາມມາດຕາ 45 ຂອງກົດໝາຍສະບັບນີ້".

**ມາດຕາ 40. ການຊັນນະສູດສະຖານທີ່ເກີດເຫດ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການຊັນນະສູດສະຖານທີ່ເກີດເຫດ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 47 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດດັ່ງນີ້:

1. ເພື່ອຊອກຫາຮ່ອງຮອຍຂອງການກະທຳຜິດ ແລະ ຫຼັກຖານ ເປັນຕົ້ນຫຼັກຖານທາງດ້ານວັດຖຸ ແນໃສ່ເຮັດໃຫ້ສະພາບຂອງການກະທຳຜິດໄດ້ແຈ້ງຂາວນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງທຳການຊັນນະສູດສະຖານທີ່ເກີດເຫດ, ເກັບກຳເອົາວັດຖຸສິ່ງຂອງ, ເອກະສານ ແລະ ອື່ນໆ ທີ່ພົວພັນກັບການກະທຳຜິດ;
2. ການຊັນນະສູດສະຖານທີ່ເກີດເຫດ ອາດຈະເຮັດຂຶ້ນກ່ອນ ຫຼື ຫຼັງການເປີດການສືບສວນ - ສອບສວນກໍໄດ້;
3. ການຊັນນະສູດສະຖານທີ່ເກີດເຫດ ຕ້ອງດຳເນີນໃນເວລາກາງເວັນ ແຕ່ຫົກໂມງເຊົ້າຫາຫົກໂມງແລງ ເວັ້ນເສັຍແຕ່ໃນກໍລະນີທີ່ມີຄວາມຈຳເປັນ ແລະ ຮີບດ່ວນເທົ່ານັ້ນ. ໃນກໍລະນີທີ່ການ ຊັນນະສູດສະຖານທີ່ເກີດເຫດ ຫາກບໍ່ທັນສິ້ນສຸດກໍໃຫ້ສືບຕໍ່ໄປຈົນກວ່າສຳເລັດ;
4. ໃນເວລາທຳການຊັນນະສູດສະຖານທີ່ເກີດເຫດນັ້ນ ຕ້ອງໃຫ້ມີພະຍານຢ່າງໜ້ອຍສອງຄົນເຂົ້າຮ່ວມນຳ. ໃນກໍລະນີຈຳເປັນ ຕ້ອງເຊີນໄອຍະການປະຊາຊົນ ແລະ ຜູ້ຕາງໜ້າອົງການປົກຄອງບ້ານເຂົ້າຮ່ວມນຳອີກດ້ວຍ;
5. ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ມີສິດນຳຕົວຜູ້ຖືກຫາ ຫຼື

ຜູ້ຖືກສົງໄສ, ຮຽກຜູ້ຖືກເສັຍຫາຍ, ພະຍານ ແລະ ເຊີນຜູ້ຊ່ຽວຊານທີ່ກ່ຽວຂ້ອງເຂົ້າຮ່ວມທຳການຊັນນະສູດສະຖານທີ່ເກີດເຫດນຳ;

6. ໃນການຊັນນະສູດສະຖານທີ່ເກີດເຫດ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງແຕ້ມແຜນວາດສະຖານທີ່ເກີດເຫດ, ເກັບກຳເອົາວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ, ເອົາຮ່ອງຮອຍການກະທຳຜິດ ແລະ ຖ່າຍຮູບໄວ້.

### ມາດຕາ 41. ການກວດຄົ້ນ

ການກວດຄົ້ນ ແມ່ນໃຫ້ປະຕິບັດ ຕາມມາດຕາ 51 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ຈະທຳການກວດຄົ້ນໄດ້ກໍຕໍ່ເມື່ອຫາກມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ ຫຼື ສານປະຊາຊົນເທົ່ານັ້ນ ເວັ້ນເສັຍແຕ່ໃນກໍລະນີທີ່ມີຄວາມຈຳເປັນອັນຮີບດ່ວນ ແຕ່ກໍຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບພາຍໃນກຳນົດຊາວສີ່ຊົ່ວໂມງ ພາຍຫຼັງທີ່ການກວດຄົ້ນໄດ້ສິ້ນສຸດແລ້ວ;
2. ກ່ອນ ແລະ ພາຍຫຼັງການກວດຄົ້ນນັ້ນ ບຸກຄົນທີ່ເຂົ້າຮ່ວມໃນການກວດຄົ້ນຕ້ອງສະແດງຄວາມບໍລິສຸດຂອງຕົນຕໍ່ເຈົ້າຂອງສະຖານທີ່, ເຈົ້າຂອງຍານພາຫະນະ ຫຼື ຕໍ່ບຸກຄົນທີ່ຖືກກວດຄົ້ນ.

### ມາດຕາ 42. ການກວດຄົ້ນເຄຫະສະຖານ ທີ່ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການກວດຄົ້ນເຄຫະສະຖານ ທີ່ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ເຄຫະສະຖານ ໝາຍເຖິງເຮືອນຢູ່ ແລະ ສິ່ງຕ່າງໆ ທີ່ຕັ້ງຢູ່ໃນບໍລິເວນເດີ່ນບ້ານ, ເຮືອ, ແພ ທີ່ໃຊ້ເປັນບ່ອນຢູ່ປະຈຳຂອງຄອບຄົວ, ສຳນັກງານ, ເຮືອນພັກ, ໂຮງແຮມ ແລະ ອື່ນໆ;
2. ການກວດຄົ້ນເຄຫະສະຖານ ຕ້ອງເຮັດຊ້ອງໜ້າອົງການປົກຄອງບ້ານ, ເຈົ້າຂອງເຮືອນ ແລະ ພະຍານຢ່າງໜ້ອຍສອງຄົນ. ໃນກໍລະນີທີ່ມີການກວດຄົ້ນສຳນັກງານ, ອົງການ, ວິສາຫະກິດ ຕ້ອງເຮັດຊ້ອງໜ້າຜູ້ຕາງໜ້າສຳນັກງານ, ອົງການ, ວິສາຫະກິດທີ່ກ່ຽວຂ້ອງ;
3. ການກວດຄົ້ນສາສະໜາສະຖານ ຊຶ່ງແມ່ນເຄຫະສະຖານປະເພດໜຶ່ງ ເຊັ່ນ: ກຸຕິວິຫານ, ສິມ, ໂບດ, ຫໍ ຕ້ອງມີການເຂົ້າຮ່ວມຂອງເຈົ້າອະທິການວັດ, ຄຸນພໍ່, ຜູ້ຮັບຜິດຊອບ ຫຼື ຜູ້ຕາງໜ້າອົງການສາສະໜາທີ່ກ່ຽວຂ້ອງນັ້ນ;
4. ການກວດຄົ້ນເຄຫະສະຖານ ແລະ ສາສະໜາສະຖານ ໃຫ້ດຳເນີນໃນເວລາກາງເວັນ

ແຕ່ທິກໂມງເຊົ້າຫາທິກໂມງແລງ. ໃນກໍລະນີທີ່ການກວດຄົ້ນຫາກໄດ້ດຳເນີນມາແລ້ວແຕ່ຍັງບໍ່ທັນສິ້ນສຸດນັ້ນ ກໍໃຫ້ສືບຕໍ່ຈົນກ່ວາຈະສຳເລັດ;

5. ວັດຖຸສິ່ງຂອງ ແລະ ເອກະສານຕ່າງໆ ທີ່ຈະຍຶດເອົາເປັນຂອງກາງໄດ້ນັ້ນ ກໍຕໍ່ເມື່ອສິ່ງດັ່ງກ່າວຫາກພົວພັນກັບການກະທຳຜິດ ຫຼື ເປັນສິ່ງທີ່ຜິດກົດໝາຍເທົ່ານັ້ນ.

**ມາດຕາ 43. ການກວດຄົ້ນຍານພາຫະນະ ແລະ ຕົວບຸກຄົນ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການກວດຄົ້ນຍານພາຫະນະ ແລະ ຕົວບຸກຄົນ ໃນຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 53 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການກວດຄົ້ນຍານພາຫະນະ ເຊັ່ນ: ລົດ, ເຮືອ ຫຼື ຍານພາຫະນະອື່ນໆ ທີ່ຖືກສົງໃສວ່າໄດ້ມີການຊຸກເຊື່ອງສິ່ງທີ່ຜິດກົດໝາຍ ຫຼື ຜູ້ກະທຳຜິດນັ້ນຈະດຳເນີນເວລາໃດກໍໄດ້ ແຕ່ຕ້ອງດຳເນີນໂດຍຊ້ອງໜ້າເຈົ້າຂອງຍານພາຫະນະນັ້ນ;
2. ການກວດຄົ້ນຕົວບຸກຄົນທີ່ຖືກຈັບຕົວ, ກັກຂັງ ຫຼື ທີ່ຖືກສົງໄສວ່າໄດ້ຊຸກເຊື່ອງສິ່ງຂອງຕ່າງໆທີ່ຜິດກົດໝາຍນັ້ນຈະເຮັດຂຶ້ນໂດຍບໍ່ມີຄຳສັ່ງກໍໄດ້;
3. ເຈົ້າໜ້າທີ່ຜູ້ທຳການກວດຄົ້ນ ຕ້ອງແມ່ນບຸກຄົນທີ່ເປັນເພດດຽວກັນກັບຜູ້ຖືກກວດຄົ້ນ. ການກວດຄົ້ນຕົວຜູ້ຍິງ ຕ້ອງເຮັດໃນສະຖານທີ່ກຳບັງ.

**ມາດຕາ 44. ບົດບັນທຶກການກວດຄົ້ນ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ບົດບັນທຶກການກວດຄົ້ນ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 54 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ເມື່ອໄດ້ກວດຄົ້ນເຄຫະສະຖານ, ຍານພາຫະນະ ຫຼື ຕົວບຸກຄົນສິ້ນສຸດແລ້ວ ເຈົ້າໜ້າທີ່ຜູ້ທຳການກວດຄົ້ນ ຕ້ອງເຮັດບົດບັນທຶກການກວດຄົ້ນ ແລະ ບັນຊີຂອງກາງຕາມຮູບປະພັນ, ຈຳນວນ ແລະຄຸນນະພາບຢ່າງລະອຽດກັບທີ່;
2. ບົດບັນທຶກການກວດຄົ້ນເຄຫະສະຖານຕ້ອງເຮັດເປັນສາມສະບັບ ແລະ ອ່ານຊ້ອງໜ້າຜູ້ເຂົ້າຮ່ວມໃນການກວດຄົ້ນ ແລ້ວພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໄວ້ເປັນຫຼັກຖານ. ບົດບັນທຶກດັ່ງກ່າວໜຶ່ງສະບັບປະກອບເຂົ້າໃນສຳນວນຄະດີ, ໜຶ່ງສະບັບມອບໃຫ້ເຈົ້າຂອງເຮືອນ ຫຼື ຜູ້ຕາງໜ້າສຳນັກງານ, ອົງການ, ວິສາຫະກິດທີ່ກ່ຽວຂ້ອງ ແລະ ອີກໜຶ່ງສະບັບ ມອບໃຫ້ອົງການປົກຄອງບ້ານ;
3. ສຳລັບບົດບັນທຶກການກວດຄົ້ນຍານພາຫະນະ ຫຼື ຕົວບຸກຄົນ ກໍຕ້ອງເຮັດເປັນ ສາມສະບັບເຊັ່ນກັນ, ໜຶ່ງສະບັບປະກອບເຂົ້າໃນສຳນວນຄະດີ, ໜຶ່ງສະບັບມອບໃຫ້ເຈົ້າ

ຂອງຍານພາຫະນະ ຫຼື ບຸກຄົນທີ່ຖືກກວດຄົ້ນ ແລະ ອີກໜຶ່ງສະບັບ ມອບໃຫ້ເຈົ້າໜ້າທີ່ເກັບມ້ຽນໄວ້.

**ມາດຕາ 45. ການຍຶດ ແລະ ການອາຍັດຊັບ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການຍຶດ ແລະ ການອາຍັດຊັບ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນ ໃຫ້ປະຕິບັດຕາມມາດຕາ 55 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ໃນກໍລະນີທີ່ໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ ແລະ ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ແລະ ຈະນຳໃຊ້ເປັນປະໂຫຍດໃນການດຳເນີນຄະດີນັ້ນ ຫົວໜ້າອົງການສືບສວນ - ສອບສວນ ຫຼື ໄອຍະການປະຊາຊົນຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດຊັບໄວ້. ສຳລັບວັດຖຸສິ່ງຂອງ ທີ່ໂຍກຍ້າຍບໍ່ໄດ້ ກໍໃຫ້ອອກຄຳສັ່ງອາຍັດຊັບ;
2. ວິທີການດຳເນີນການຍຶດ ຫຼື ການອາຍັດຊັບ ແລະ ການເຮັດບົດບັນທຶກການຍຶດ ຫຼື ການອາຍັດຊັບນັ້ນ ໃຫ້ ປະຕິບັດຕາມ ມາດຕາ 51, 52 ແລະ ມາດຕາ 54 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 46. ການຮັກສາຂອງກາງ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການຮັກສາຂອງກາງ ກ່ຽວກັບຄະດີປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 56 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ຂອງກາງ ແມ່ນວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ໝາຍຄວາມວ່າວັດຖຸສິ່ງຂອງທີ່ຮັບໃຊ້ ຫຼື ຈະຮັບໃຊ້ການກະທຳຜິດ, ທີ່ໄດ້ມາ ຫຼື ຈະໄດ້ມາຈາກການກະທຳຜິດ;
2. ຂອງກາງດັ່ງກ່າວໄດ້ມາຈາກການຍຶດ, ການກວດຄົ້ນ ຫຼື ໄດ້ມາຈາກການຊັນນະສູດ ແລະ ໄດ້ມາຈາກການດຳເນີນມາດຕະການອື່ນໆຂອງການສືບສວນ - ສອບສວນ;
3. ຂອງກາງ ຕ້ອງໄດ້ປົກປັກຮັກສາ, ຄຸ້ມຄອງໃຫ້ດີ, ເກັບມ້ຽນໃນສະຖານທີ່ປອດໄພ ແລະ ເໝາະສົມ ພ້ອມທັງຂຶ້ນບັນຊີຢ່າງລະອຽດ. ຂອງກາງທີ່ເປັນວັດຖຸສິ່ງຂອງທີ່ສາມາດຫຸ້ມຫໍ່ໄດ້ ຕ້ອງໄດ້ຫຸ້ມຫໍ່ໃສ່ຖົງ, ອັດຕິດຄັ່ງ, ປະທັບຕາ ແລະ ຮັກສາໄວ້ໃຫ້ດີ. ຂອງກາງທີ່ເປັນເງິນຕາ, ເງິນຕາຕ່າງປະເທດ, ເຊັກ ຫຼື ພັນທະບັດອື່ນ, ວັດຖຸທີ່ມີຄ່າ ຕ້ອງເອົາໄປຝາກໄວ້ນຳທະນາຄານ ຕາມລະບຽບການ. ສຳລັບເງິນທີ່ເປັນຫຼັກຖານໃນການດຳເນີນຄະດີ ຕ້ອງມີການຈົດເລກເງິນແຕ່ລະໃບ. ຂອງກາງທີ່ເປັນສິ່ງບູດເນົ່າ ຫຼື ເສື່ອມຄຸນໄວນັ້ນ ຈະຕ້ອງຂາຍ ເພື່ອເອົາເງິນມາຮັກສາໄວ້;

4. ບຸກຄົນໃດນຳເອົາຂອງກາງໄປໃຊ້, ເຮັດໃຫ້ເປ່ເພ່, ຕົກເຮ່ຍເສຍຫາຍ, ສັບປ່ຽນ ຫຼື ຍັກຍອກເອົາ ຈະຖືກຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 112 ແລະ 157 ຂອງກົດໝາຍອາຍາ;
5. ບັນຊີຂອງກາງຄະດີ ຕ້ອງສົ່ງພ້ອມກັບສຳນວນຄະດີ. ເມື່ອສຳນວນຄະດີຮອດຂັ້ນໃດ ສິດຕົກລົງກ່ຽວກັບຂອງກາງຄະດີ ແມ່ນຂຶ້ນກັບຂັ້ນນັ້ນ.

## ໝວດທີ X
## ມາດຕະການສະກັດກັ້ນ ທີ່ນຳໃຊ້ເຂົ້າໃນການ ດຳເນີນຄະດີອາຍາກ່ຽວກັບປ່າໄມ້ ແລະ ຊັບພະຍອນກອນປ່າໄມ້

**ມາດຕາ 47. ປະເພດມາດຕະການສະກັດກັ້ນ ທີ່ນຳໃຊ້ເຂົ້າໃນການດຳເນີນຄະດີອາຍາກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ປະເພດມາດຕະການສະກັດກັ້ນ ທີ່ນຳໃຊ້ເຂົ້າໃນການດຳເນີນຄະດີອາຍາກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະກອບດ້ວຍ 7 ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 59 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດັ່ງນີ້:

1. ການພາຕົວ;
2. ການກັກຕົວ;
3. ການຈັບຕົວ;
4. ການກັກຂັງພາງ;
5. ການປ່ອຍຕົວພາງ;
6. ການຄຸມຕົວຢູ່ກັບທີ່;
7. ການງົດໜ້າທີ່ ຫຼືຕຳແໜ່ງ.

**ມາດຕາ 48. ການພາຕົວ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການພາຕົວ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດວ່າ: "ໃນກໍລະນີທີ່ຜູ້ຖືກສົງໄສ, ຜູ້ຖືກຫາ, ພະຍານ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ ຫົວໜ້າອົງການສືບສວນ - ສອບສວນ ຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວ".

**ມາດຕາ 49. ການກັກຕົວຜູ້ຖືກສົງໄສ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການກັກຕົວຜູ້ຖືກສົງໄສ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້

ປະຕິບັດຕາມມາດຕາ 61 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ເມື່ອໄດ້ເອົາຄຳໃຫ້ການຂອງຜູ້ຖືກສົງໄສແລ້ວ ຖ້າເຫັນວ່າມີຂໍ້ມູນໜັກແໜ້ນສົມຄວນວ່າຜູ້ກ່ຽວໄດ້ກະທຳຜິດທາງອາຍາທີ່ກົດໝາຍໄດ້ກຳນົດໂທດ ຕັດອິດສະລະພາບ, ຫົວໜ້າອົງການສືບສວນ - ສອບສວນ ອາດຈະອອກຄຳສັ່ງກັກຕົວຜູ້ກ່ຽວໄວ້ໄດ້ສີ່ສິບແປດຊົ່ວໂມງ ເພື່ອດຳເນີນການສືບສວນ - ສອບສວນຕໍ່ ແຕ່ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ໄອຍະການປະຊາຊົນຊາບພາຍໃນກຳນົດຊາວສີ່ຊົ່ວໂມງນັບແຕ່ວັນທີ່ໄດ້ກັກຕົວເປັນຕົ້ນໄປ;
2. ພາຍໃນກຳນົດສີ່ສິບແປດຊົ່ວໂມງນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນຕ້ອງຮີບຮ້ອນເອົາຄຳໃຫ້ການເບື້ອງຕົ້ນຂອງຜູ້ຖືກກັກຕົວ, ພາຍຫຼັງເອົາຄຳໃຫ້ການແລ້ວ ກໍຕ້ອງລົງຄຳເຫັນຊີ້ຂາດດັ່ງຕໍ່ໄປນີ້:
   1). ຖ້າຫາກເຫັນວ່າບໍ່ມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ - ສອບສວນໄດ້ນັ້ນ ເຈົ້າໜ້າທີ່ສືບສວນ - ສອບສວນ ຫຼື ພະນັກງານສອບສວນຕ້ອງຂໍຄຳສັ່ງປ່ອຍຕົວຈາກຫົວໜ້າອົງການສືບສວນ- ສອບສວນ ຫຼື ໄອຍະການປະຊາຊົນ. ແລ້ວປ່ອຍຕົວຜູ້ຖືກກັກຕົວພ້ອມທັງລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນຊາບໃນທັນໃດ;
   2). ຖ້າຫາກເຫັນວ່າມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ - ສອບສວນໄດ້ ແລະ ຖ້າຫາກເຫັນວ່າມີຄວາມຈຳເປັນຕ້ອງທຳການກັກຂັງພາງແລ້ວ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ຂໍຄຳສັ່ງກັກຂັງພາງຈາກໄອຍະການປະຊາຊົນ. ສຳລັບພະນັກງານສອບສວນ ກໍຕ້ອງຂໍຄຳສັ່ງເປີດການສືບສວນ-ສອບສວນ ແລະ ຄຳສັ່ງກັກຂັງພາງຈາກໄອຍະການປະຊາຊົນ ເຊັ່ນດຽວກັນ.

**ມາດຕາ 50. ການຈັບຕົວຜູ້ຖືກສົງໄສ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການຈັບຕົວຜູ້ຖືກສົງໄສ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 62 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການຈັບຕົວບຸກຄົນຜູ້ໃດຜູ້ໜຶ່ງ ຕ້ອງມີຄຳສັ່ງເປັນລາຍລັກອັກສອນ ຂອງໄອຍະການປະຊາຊົນ ຫຼື ສານປະຊາຊົນ ເວັ້ນເສຍແຕ່ກໍລະນີການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ;
2. ກ່ອນຈະອອກຄຳສັ່ງຈັບຕົວນັ້ນ ໄອຍະການປະຊາຊົນ ຫຼື ສານປະຊາຊົນ ຕ້ອງອີງໃສ່ເງື່ອນໄຂດັ່ງນີ້:
   1) ການກະທຳຕ້ອງແມ່ນການກະທຳຜິດທາງອາຍາ ທີ່ກົດໝາຍໄດ້ກຳນົດໂທດຕັດ

ອິດສາລະພາບ;

2) ຫຼັກຖານໃນຄະດີໜັກແໜ້ນ.

3. ນອກນີ້ແລ້ວ ຕ້ອງອີງໃສ່ເງື່ອນໄຂໃດເງື່ອນໄຂໜຶ່ງເຊັ່ນ: ຜູ້ຖືກສົງໄສອາດຈະເອົາຕົວຫຼົບ ໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ເສຍຫາຍ, ພະຍານ ຫຼື ຜູ້ສົງໃສອາດຖືກທຳຮ້າຍຈາກຜູ້ເສຍຫາຍ ຫຼື ຈາກບຸກຄົນອື່ນ;

4. ຖ້າຫາກຈະຈັບຕົວພຶກຂຸ ຫຼື ສາມະເນນ ຕ້ອງແຈ້ງໃຫ້ເຈົ້າອະທິການວັດ ຫຼື ຜູ້ຕາງໜ້າຊາບ ເພື່ອປົງສິກຂາບົດເສຍກ່ອນ, ໃນກໍລະນີຈັບຕົວນັກບວດຂອງສາສະໜາອື່ນກໍຕ້ອງແຈ້ງໃຫ້ຫົວໜ້າຮັບຜິດຊອບຂອງອົງການສາສະໜານັ້ນຊາບແລ້ວຈຶ່ງຈັບຕົວ;

5. ການຈັບຕົວໃນກໍລະນີທຳມະດາ ກໍຕ້ອງແຈ້ງຄຳສັ່ງ ພ້ອມດ້ວຍສາເຫດຂອງການຈັບຕົວໃຫ້ຜູ້ຖືກຈັບຕົວຊາບ;

6. ໃນທຸກກໍລະນີທີ່ພາຍຫຼັງໄດ້ຈັບຕົວຜູ້ຖືກຫາແລ້ວ ເຈົ້າໜ້າທີ່ສືບສວນ - ສອບສວນຕ້ອງລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນຊາບ ພາຍໃນກຳນົດຊາວສີ່ຊົ່ວໂມງ. ການເອົາຄຳໃຫ້ການຂອງຜູ້ຖືກຈັບຕົວ ຕ້ອງດຳເນີນຢ່າງຊ້າພາຍໃນກຳນົດສີ່ສິບແປດຊົ່ວໂມງ ພ້ອມທັງລົງຄຳເຫັນວ່າຈະປ່ອຍຕົວ ຫຼື ກັກຂັງພາງ;

7. ໃນກໍລະນີທີ່ເຫັນວ່າຄວນປ່ອຍຕົວ ຫຼື ຕ້ອງກັກຂັງພາງແລ້ວ ຫົວໜ້າອົງການສືບສວນ - ສອບສວນ ຫຼື ພະນັກງານສອບສວນ ຕ້ອງຂໍຄຳສັ່ງປ່ອຍຕົວ ຫຼື ຄຳສັ່ງກັກຂັງພາງຈາກໄອຍະການປະຊາຊົນ;

8. ພາຍຫຼັງທີ່ໄດ້ຮັບຄຳສະເໜີຂໍປ່ອຍຕົວ ຫຼື ກັກຂັງພາງຂອງຫົວໜ້າອົງການສືບສວນ - ສອບສວນ ຫຼື ພະນັກງານສອບສວນແລ້ວ ໄອຍະການປະຊາຊົນຕ້ອງລົງຄຳເຫັນຊີ້ຂາດພາຍໃນກຳນົດຊາວສີ່ຊົ່ວໂມງ ວ່າຈະໃຫ້ປ່ອຍ ຫຼື ຈະໃຫ້ກັກຂັງພາງ;

9. ໃນກໍລະນີທີ່ບໍ່ແມ່ນເຈົ້າໜ້າທີ່ສືບສວນ - ສອບສວນທຳການຈັບຕົວນັ້ນ ຕ້ອງນຳຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ - ສອບສວນໃນທັນໃດ. ສຳລັບການຈັບຕົວຢູ່ຫ່າງໄກສອກຫຼີກນັ້ນ ໃຫ້ນຳຕົວຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ - ສອບສວນ ພາຍໃນກຳນົດເຈັດວັນນັບແຕ່ມື້ຈັບຕົວເປັນຕົ້ນໄປ;

10. ການຈັບຕົວຕ້ອງດຳເນີນໄປດ້ວຍວິທີ ແລະ ຮູບການອັນເໝາະສົມກັບລັກສະນະຂອງການກະທຳຜິດ ແລະ ຜູ້ຖືກຈັບຕົວ;

11. ຫ້າມທຸບຕີທໍລະມານຜູ້ຖືກຈັບຕົວ;

12. ການຈັບຕົວບໍ່ວ່າຈະແມ່ນກໍລະນີໃດກໍຕ້ອງແຈ້ງໃຫ້ຄອບຄົວ, ສຳນັກງານ, ອົງການ ຫຼື ວິສາຫະກິດທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກຳນົດ ຊາວສີ່ຊົ່ວໂມງຢ່າງຊ້າ ແລະ ຕ້ອງແຈ້ງສະຖານທີ່ກັກຂັງພ້ອມ ຖ້າຫາກວ່າບໍ່ເປັນອຸປະສັກໃນການດຳເນີນຄະດີ.

ມາດຕາ 51. ການຈັບຕົວໃນກໍລະນີກະທໍາຜິດເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການຈັບຕົວໃນກໍລະນີກະທໍາຜິດເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນບໍ່ຈໍາເປັນຕ້ອງມີຄໍາສັ່ງຂອງໄອຍະການປະຊາຊົນ ຫຼື ສານປະຊາຊົນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

ມາດຕາ 52. ບົດບັນທຶກການຈັບຕົວ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ບົດບັນທຶກການຈັບຕົວ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການບັນທຶກການຈັບຕົວ ຊຶ່ງບໍ່ວ່າໃນກໍລະນີໃດຂອງການຈັບຕົວຜູ້ທີ່ຖືກສົງໃສວ່າມີການກະທໍາຜິດທາງອາຍາໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ກໍຕ້ອງໄດ້ເຮັດບົດບັນທຶກໄວ້ເປັນຫຼັກຖານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 64 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

ມາດຕາ 53. ການຄຸມຕົວຢູ່ກັບທີ່ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການຄຸມຕົວຢູ່ກັບທີ່ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 67 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ອາດຈະຖືກຄຸມຕົວຢູ່ກັບທີ່ໂດຍບໍ່ໃຫ້ຜູ້ກ່ຽວອອກຈາກບ່ອນຢູ່ ຫຼື ສະຖານທີ່ໃດໜຶ່ງໂດຍບໍ່ຮັບອະນຸຍາດຈາກຫົວໜ້າອົງການສືບສວນ - ສອບສວນ ຫຼື ໄອຍະການປະຊາຊົນ;
2. ການຄຸມຕົວຢູ່ກັບທີ່ ຕ້ອງມີຄໍາສັ່ງຂອງຫົວໜ້າອົງການສືບສວນ - ສອບສວນ ຫຼື ໄອຍະການປະຊາຊົນ ໂດຍວາງເງື່ອນໄຂໃນການປະຕິບັດໃຫ້ແກ່ຜູ້ຖືກຄຸມຕົວຢູ່ກັບທີ່;
3. ໃນກໍລະນີຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ຫາກໄດ້ລະເມີດລະບຽບຂອງການຄຸມຕົວຢູ່ກັບທີ່ແລ້ວ ອາດຈະນໍາໃຊ້ມາດຕະການສະກັດກັ້ນອື່ນ ທີ່ໜັກກວ່າເກົ່າໃສ່ຜູ້ກ່ຽວກໍໄດ້.

ມາດຕາ 54. ການງົດຕໍາແໜ່ງ ຫຼື ໜ້າທີ່ຜູ້ຖືກຫາ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ການງົດຕໍາແໜ່ງ ຫຼື ໜ້າທີ່ຜູ້ຖືກຫາ ໃນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 68 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການງົດຕໍາແໜ່ງ ຫຼື ໜ້າທີ່ ແມ່ນການໂຈະຕໍາແໜ່ງ ຫຼື ໜ້າທີ່ຂອງຜູ້ຖືກຫາຍ້ອນວ່າການກະທໍາຜິດນັ້ນພົວພັນເຖິງຕໍາແໜ່ງ ຫຼື ໜ້າທີ່ຂອງຜູ້ກ່ຽວ ເພື່ອບໍ່ໃຫ້ເປັນອຸປະສັກໃນການສືບສວນ - ສອບສວນ;
2. ການງົດຕໍາແໜ່ງ ຫຼື ໜ້າທີ່ ຕ້ອງມີຄໍາສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ;

3. ຄຳສັ່ງງົດຕຳແໜ່ງ ຫຼື ໜ້າທີ່ນັ້ນ ຕ້ອງສົ່ງໃຫ້ອົງການຈັດຕັ້ງທີ່ຜູ້ຖືກສົງໄສ ຫຼື ຜູ້ຖືກຫາສັງກັດ ເພື່ອດຳເນີນການງົດຕຳແໜ່ງ ຫຼື ໜ້າທີ່.

## ໝວດທີ XI
## ການໂຈະ ແລະ ການສືບຕໍ່ດຳເນີນ ຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

**ມາດຕາ 55. ການໂຈະການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການໂຈະການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 69 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການໂຈະການດຳເນີນຄະດີ ແມ່ນການຢຸດເຊົາການດຳເນີນຄະດີໄວ້ຊົ່ວຄາວດ້ວຍສາເຫດດັ່ງຕໍ່ໄປນີ້:
   1) ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບໜີ ຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ ຫລື ຫຼັກຖານ ໃນຄະດີຍັງບໍ່ທັນໜັກແໜ້ນ;
   2) ບໍ່ສາມາດຮູ້ໄດ້ວ່າ ແມ່ນຜູ້ໃດເປັນຜູ້ກະທຳຜິດໃນຄະດີ;
   3) ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດ ໂດຍມີການຢັ້ງຢືນຈາກຄະນະແພດ;
2. ການໂຈະການດຳເນີນຄະດີໃນກໍລະນີທີ 1 ແລະ 2 ຈະມີໄດ້ກໍຕໍ່ເມື່ອກຳນົດເວລາການດຳເນີນການສືບສວນ - ສອບສວນຫາກໄດ້ສິ້ນສຸດແລ້ວ;
3. ການໂຈະການດຳເນີນຄະດີໄວ້ນັ້ນ ຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ. ຄຳສັ່ງໂຈະການດຳເນີນຄະດີ ຂອງຫົວໜ້າອົງການສືບສວນ - ສອບສວນ ນັ້ນ ຕ້ອງໃຫ້ອັດສຳເນົາ ແລ້ວສົ່ງລາຍງານໃຫ້ໄອຍະການປະຊາຊົນຊາບໃນທັນໃດ;
4. ການໂຈະການດຳເນີນຄະດີໃນກໍລະນີທີ 3 ນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງສົ່ງຕົວຜູ້ຖືກຫາໄປປິ່ນປົວ;
5. ຄະດີອາຍາທີ່ໄດ້ໂຈະໄວ້ນັ້ນ ກໍຈະຖືກຊັດມ້ຽນ ເມື່ອຫາກໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;
6. ຄຳສັ່ງໂຈະ ແລະ ຄຳສັ່ງຊັດມ້ຽນຄະດີ ຕ້ອງແຈ້ງໃຫ້ຄູ່ຄວາມຊາບ ຊຶ່ງຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງມີສິດຂໍອຸທອນພາຍໃນກຳນົດ ເຈັດວັນ ນັບແຕ່ມື້ຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

**ມາດຕາ 56. ການສືບຕໍ່ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ຖືກໂຈະໄວ້ນັ້ນຄືນໃໝ່**

ການສືບຕໍ່ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ຖືກໂຈະໄວ້ນັ້ນຄືນໃໝ່ ແມ່ນໃຫ້ປະຕິບັດຕາມມາດຕາ 70 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາທີ່ກຳນົດວ່າ: "ເມື່ອສາເຫດຂອງການໂຈະການດຳເນີນຄະດີຫາກຕົກໄປ ແລະ ອາຍຸຄວາມໃນການຮ້ອງຟ້ອງຍັງບໍ່ທັນສິ້ນສຸດ ຫົວໜ້າອົງການສືບສວນ - ສອບສວນ ຕ້ອງອອກຄຳສັ່ງສືບຕໍ່ດຳເນີນຄະດີທີ່ຖືກໂຈະໄວ້ນັ້ນຄືນໃໝ່".

**ມາດຕາ 57. ການຊຸດມ້ຽນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ການຊຸດມ້ຽນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ປະຕິບັດຕາມມາດຕາ 71 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການຊຸດມ້ຽນຄະດີ ແມ່ນການຢຸດເຊົາການດຳເນີນຄະດີດ້ວຍສາເຫດດັ່ງນີ້:
    1) ເມື່ອມີສາເຫດໃດໜຶ່ງທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
    2) ເມື່ອບໍ່ມີຫຼັກຖານພຽງພໍວ່າຜູ້ຖືກຫາໄດ້ເປັນຜູ້ກະທຳຜິດ.
2. ໃນກໍລະນີທີ່ມີການຊຸດມ້ຽນຄະດີ ໄອຍະການປະຊາຊົນຕ້ອງອອກຄຳສັ່ງປ່ອຍຕົວຜູ້ຖືກຫາໃນທັນໃດ. ເຈົ້າໜ້າທີ່ສືບສວນ – ສອບສວນ, ພະນັກງານສອບສວນ ຕ້ອງສົ່ງສິ່ງຂອງຕິດຕົວ ທີ່ຖືກຕ້ອງຕາມກົດໝາຍ ລວມທັງວັດຖຸສິ່ງຂອງທີ່ໄດ້ຍຶດເປັນຂອງກາງ ຊຶ່ງເປັນກຳມະສິດຂອງຜູ້ ກ່ຽວຄືນໃນທັນໃດ;
3. ການຊຸດມ້ຽນຄະດີມີ 2 ປະເພດຄື:
    1) ການຊຸດມ້ຽນຄະດີທາງດ້ານກົດໝາຍ;
    2) ການຊຸດມ້ຽນຄະດີທາງດ້ານຫຼັກຖານ.

ການຊຸດມ້ຽນຄະດີທາງດ້ານກົດໝາຍ ແມ່ນການຊຸດມ້ຽນຄະດີຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕາ 71;

ການຊຸດມ້ຽນຄະດີທາງດ້ານຫຼັກຖານ ແມ່ນການຊຸດມ້ຽນຄະດີຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕາ 71 .

**ມາດຕາ 58. ການສືບຕໍ່ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ທີ່ຖືກຊຸດມ້ຽນຄືນໃໝ່**

ການສືບຕໍ່ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ທີ່ຖືກຊຸດມ້ຽນຄືນໃໝ່ ແມ່ນໃຫ້ປະຕິບັດຕາມມາດຕາ 72 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຄັ່ງຄັດ ດັ່ງນີ້:

1. ການຊຸດມ້ຽນຄະດີທາງດ້ານກົດໝາຍ ແມ່ນບໍ່ສາມາດສືບຕໍ່ດຳເນີນຄະດີຄືນໃໝ່ໄດ້;
2. ການຊຸດມ້ຽນຄະດີທາງດ້ານຫຼັກຖານ ແມ່ນສາມາດສືບຕໍ່ດຳເນີນຄະດີຄືນໃໝ່ໄດ້;

3. ການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນນັ້ນ ຈະດຳເນີນໄດ້ກໍ່ຕໍ່ເມື່ອຫາກມີຫຼັກຖານໃໝ່ ແລະ ອາຍຸຄວາມໃນການຮ້ອງຟ້ອງທາງອາຍາຍັງບໍ່ທັນໄດ້ສິ້ນສຸດເທື່ອ.

**ມາດຕາ 59. ບົດສະຫຼຸບຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້**

ບົດສະຫຼຸບຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນຜົນຂອງການດຳເນີນການສືບສວນ - ສອບສວນຄະດີ ຂອງເຈົ້າໜ້າທີ່ກວດກາປ່າໄມ້, ສັງກັດຢູ່ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້.

ພາຍຫຼັງສິ້ນສຸດການສືບສວນ - ສອບສວນແລ້ວ ຫາກມີຫຼັກຖານໜັກແໜ້ນວ່າຜູ້ຖືກຫາໄດ້ກະທຳຜິດແທ້ ເຈົ້າໜ້າທີ່ສືບສວນ - ສອບສວນ ຕ້ອງສົ່ງບົດສະຫຼຸບການສືບສວນ - ສອບສວນພ້ອມດ້ວຍສຳນວນຄະດີ ແລະ ຂອງກາງທັງໝົດໃຫ້ໄອຍະການປະຊາຊົນ.

## ໝວດທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 60. ການຈັດຕັ້ງປະຕິບັດ**

ຫົວໜ້າກົມກວດກາປ່າໄມ້ ໃນຖານະຫົວໜ້າອົງການສືບສວນ - ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ເຈົ້າໜ້າທີ່ສັດນ້ຳ ແລະ ສັດປ່າ ມີໜ້າທີ່ຊີ້ນຳການຈັດຕັ້ງປະຕິບັດຂອງກອງກວດກາປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຈົ່ງພ້ອມກັນຊຸກຍູ້ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 61. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳ ຂອງລັດຖະມົນຕີ ກ່ຽວກັບການກວດກາປ່າໄມ້, ຜະລິດຕະພັນໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ສະບັບເລກທີ 0142/ກປ, ລົງວັນທີ 07 ຕຸລາ 2009.

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳໃດຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສິຕາເຮັ້ງ ຣາຊະພົນ